

# ການສືບຂ່າວ

## Investigativie

## ສຳລັບສື່ສານມວນຊົນ ປີ 4

2011

# ວິຊາ: ການສືບຂ່າວ

## ຂ່າວສືບສວນ (Investigative)

### 1. ຄວາມໝາຍຂອງຂ່າວສືບສວນ

ຂ່າວສືບສວນ (Investigative) ເປັນການລາຍງານຂ່າວທີ່ມີລັກສະນະຂອງການສືບຫາຂ່າວ, ຄົ້ນຫາຂໍ້ຄວາມຈິງຢ່າງຕໍ່ເນື່ອງ ແລະເປັນການຕໍ່ສູ້ກັບຄວາມບໍ່ຖືກຕ້ອງ ຫຼື ຄວາມເປັນທຳທີ່ເກີດຂຶ້ນນັ້ນຢູ່ໃນສັງຄົມ. ໃນສັງຄົມປັດຈຸບັນ ແມ່ນມີຄວາມຊັບຊ້ອນຫຍຸ້ງຍາກຫຼາຍປະການສົມຄວນ ແລະເປັນບັນຫາທີ່ມີລັກສະນະເລິກເຊິ່ງ, ລະອຽດອ່ອນທີ່ສຸດເຊິ່ງຈະຕ້ອງເປັນໜ້າທີ່ຂອງຜູ້ສື່ຂ່າວລາຍງານຂ່າວກ່ຽວກັບປາກົດການດັ່ງກ່າວນັ້ນ. ແຕ່ການລາຍງານຂ່າວຂໍ້ຄວາມຈິງຕາມທີ່ປາກົດຜ່ານສາຍຕາຂອງຜູ້ສື່ຂ່າວບໍ່ພຽງພໍ, ຈະຕ້ອງໄດ້ສືບສວນລົງເລິກເຖິງສາເຫດຂອງບັນຫາ ລວມເຖິງເບື້ອງຫຼັງຂອງເຫດການນັ້ນຢູ່ຕະຫຼອດເວລາ. ໂດຍທົ່ວໄປແລ້ວ ເມື່ອເຫດ ການໃດໜຶ່ງ ຖືກລາຍງານເປັນຂ່າວໃນລັກສະນະສືບສວນ, ມັກກໍ່ໃຫ້ເກີດຄວາມສົນໃຈ, ຕິດຕາມ ແລະວິພາກ, ວິຈານເລື່ອງລາວນັ້ນຢ່າງກວ້າງຂວາງ, ເຮັດໃຫ້ໜ່ວຍງານທີ່ຮັບຜິດຊອບໄດ້ດຳເນີນງານປັບປຸງ, ປ່ຽນແປງ, ລິເລີ່ມ ຫຼື ຢຸດຕິເລື່ອງດັ່ງກ່າວນັ້ນ. ນອກຈາກນັ້ນ ຍັງນຳໄປສູ່ການຮ້ອງຟ້ອງ, ດຳເນີນຄະດີຕໍ່ຜູ້ກະທຳ ຜິດ ຫຼື ມີສ່ວນກ່ຽວຂ້ອງໄດ້ອີກຕື່ມທາງໜຶ່ງ.

ການລາຍງານຂ່າວສືບສວນມັກຈະກ່ຽວຂ້ອງກັບເລື່ອງຂອງການດຳເນີນງານຂອງໂຄງການຂະໜາດໃຫຍ່ຂອງລັດຖະບານ, ຂ້າລາຊະການ, ພະນັກງານ, ທະຫານ, ຕຳຫຼວດ, ນັກທຸລະກິດ, ພາກສ່ວນຂອງລັດ ແລະເອກະຊົນອື່ນໆ ຫຼື ການເຄື່ອນໄຫວຂອງພັກການເມືອງ, ອາຊະຍະກຳຮຸນແຮງ ແລະອາຊະຍະກຳຂ້າມຊາດ. ການດຳເນີນກົນອຸບາຍທຸລະກິດຂະໜາດໃຫຍ່ ແລະທຸລະກິດຂ້າມຊາດ, ເຄືອຂ່າຍທຸລະກິດຜິດກົດໝາຍ, ການໃຊ້ອຳນາດໜ້າທີ່ຜິດຂອງເຈົ້າໜ້າທີ່ຂອງລັດເປັນຕົ້ນ.

### 2. ຄວາມສຳຄັນຂອງຂ່າວສືບສວນ

ຂ່າວມັກຈະຢູ່ນອກປ່ອງຢ້ຽມຂອງພວກເຮົາສະເໝີ, ມີຫຼາຍສິ່ງຫຼາຍຢ່າງບໍ່ພົ້ນເດັ່ນອອກມາໃຫ້ພວກເຮົາເຫັນ. ສະນັ້ນ, ບໍ່ຄວນລໍຖ້າໃຫ້ສິ່ງຕ່າງໆເກີດຂຶ້ນ ຫຼື ລໍຖ້າໃຫ້ບັນນາທິການມອບໝາຍວຽກໃຫ້; ເຮົາຄວນມີຄວາມຄິດກ່ຽວກັບເລື່ອງລາວທີ່ກຳລັງຈະເກີດ ຫຼື ເກີດຂຶ້ນແລ້ວ. ເຮົາສາມາດຊອກເອົາຂ່າວດ້ວຍການຕິດຕໍ່ຫາຫ້ອງການຂ່າວສານຂອງລັດ ຫຼື ເອກະຊົນຕ່າງໆເປັນປະຈຳ.

ສຳລັບແຫຼ່ງຂ່າວການສື່ຂ່າວສືບສວນສອບສວນໄດ້ແບ່ງອອກເປັນສອງລັກສະນະໃຫຍ່ຄື:

- ແຫຼ່ງຂ່າວເປັນບຸກຄົນເຊັ່ນ ຜູ້ເສຍຜົນປະໂຫຍດ ຫຼື ຜູ້ເສຍຫາຍຈາກເຫດການທີ່ເກີດຂຶ້ນເຊິ່ງມັກຈະເປັນຜູ້ອອກມາເປີດເຜີຍຂໍ້ມູນ.ຜູ້ໄດ້ປະໂຫຍດຈາກເຫດການ ເຊິ່ງອາດຈະມີຄວາມຕ້ອງ

ການເປີດເຜີຍຂໍ້ມູນ ແລະບໍ່ຕ້ອງການເປີດເຜີຍຂໍ້ມູນຕໍ່ເຈົ້າໜ້າທີ່ຜູ້ຮັບຜິດຊອບ, ເຈົ້າໜ້າທີ່ທີ່ກ່ຽວຂ້ອງ ລວມເຖິງນັກການເມືອງສຸດທ້າຍກໍ່ຄື ຜູ້ຊຳນິຊຳນານຂອງຜູ້ຊ່ຽວຊານສະເພາະດ້ານ, ມີຄວາມຮູ້ເລິກເຊິ່ງໃນເລື່ອງຂ່າວ. ແຫຼ່ງຂ່າວທີ່ກ່າວມານີ້ ຕ້ອງເປັນບຸກຄົນທີ່ໜ້າເຊື່ອຖື, ສາມາດໄວ້ວາງໃຈເຊິ່ງກັນແລະກັນ ກັບຜູ້ສື່ຂ່າວ ເພາະຈະເຮັດໃຫ້ຂໍ້ມູນຖືກຕ້ອງ ແລະເຊື່ອຖືໄດ້.

- ແຫຼ່ງຂ່າວທີ່ເປັນເອກະສານຖືວ່າມີຄວາມສຳຄັນໃນຖານະທີ່ເປັນຫຼັກຖານ, ຢືນຢັນການກະທຳ ຜິດຂອງບຸກຄົນ, ໜ່ວຍງານ ຫຼື ຢືນຢັນຄວາມຖືກຕ້ອງຂອງຂໍ້ມູນໄດ້ເປັນຢ່າງດີ. ຕ້ອງມີການນຳສະ ເໜີຫຼັກຖານພະຍານປະກອບນຳສະເໜີຂ່າວ, ແຫຼ່ງຂ່າວທີ່ເປັນເອກະສານ ໄດ້ແກ່ ບັນທຶກປະຈຳວັນຂອງເຈົ້າໜ້າທີ່ຕຳຫຼວດ, ເອກະສານສຳຄັນຂອງໜ່ວຍງານລາຊະການຕ່າງໆ. ລາຍງານການວິໄຈ, ສະຫຼຸບຜົນການດຳເນີນທຶນງານຂອງໜ່ວຍງານ, ລາຍງານການປະຊຸມເປັນຕົ້ນ. ສະນັ້ນ, ຜູ້ສື່ຂ່າວຕ້ອງສະແຫວງຫາວິທີການເຂົ້າເຖິງຂອງຂໍ້ມູນຂອງແຫຼ່ງຂ່າວນີ້ໃຫ້ໄດ້.

## 3. ລັກສະນະການລາຍງານຂ່າວສືບສວນ (Investigative Reporting)

ການລາຍງານຂ່າວແບບສືບສວນມາຈາກຄຳໃນພາສາອັງກິດວ່າ InvestigativeReporting, ຄະນະກຳມະການ, ກຳມາທິການ ຫຼື ລາຊະບັນດິດໄດ້ໃຊ້ຄຳວ່າ ການລາຍງານຂ່າວສືບສວນ. ເປັນຂະບວນການທີ່ຕໍ່ເນື່ອງຕັ້ງແຕ່ການຄິດຄົ້ນຫາປະເດັນຂ່າວ, ການສະແຫວງຫາຂ່າວ, ການຂຽນຂ່າວຈົນຮອດການລາຍງານຂ່າວອອກສູ່ການຮັບຮູ້ຂອງສາທາລະນະຊົນ. ຜ່ານສື່ມວນຊົນ ບໍ່ວ່າຈະເປັນໜັງສືພິມ, ວາລະສານ, ໂທລະພາບ, ວິທະຍຸ ແລະອື່ນໆກໍ່ຕາມ, ນັກວິຊາການ ຫຼື ນັກວິຊາຊີບດ້ານສື່ສານມວນຊົນກໍ່ຍັງໃຫ້ຄວາມເຫັນວ່າການເຮັດຂ່າວ ຫຼື ຫາຂ່າວເພື່ອນຳມາສະເໜີໃນສື່ມວນຊົນ. ບໍ່ວ່າຂ່າວປະເພດໃດກໍ່ຕາມ, ຂ່າວທຸກຂ່າວຕ້ອງໄດ້ຜ່ານການສືບສວນ. ເພາະການເຮັດຂ່າວ ຜູ້ສື່ຂ່າວຕ້ອງໃຊ້ວິທີການສືບທັງໝົດ, ພຽງແຕ່ວ່າຈະໄດ້ສືບຂ່າວຫຼາຍ ຫຼື ໜ້ອຍແຕກຕ່າງກັນໄປເທົ່ານັ້ນ.

ເຖິງແນວໃດກໍ່ຕາມ ຍັງມີຄວາມເຫັນຢ່າງຈະແຈ້ງໃນເລື່ອງການລາຍງານຂ່າວສືບສວນໂດຍຊີ້ບອກໃຫ້ເຫັນວ່າ ການລາຍງານຂ່າວສືບສວນເປັນຂະບວນການທີ່ໃຫ້ລາຍລະອຽດຂອງຂ່າວຫຼາຍກວ່າ, ໃຊ້ເວລາໃນການຕິດຕາມຮວບຮວມຂ່າວຫຼາຍກວ່າ ແລະໃຫ້ການວິເຄາະເຈາະເລິກທີ່ສະທ້ອນເຖິງສາເຫດຂອງບັນຫານັ້ນໆຫຼາຍກວ່າລາຍງານຂ່າວແບບເຫດການທົ່ວໄປທີ່ສິ້ນສຸດໄປໃນວັນໆ day by day ເທົ່ານັ້ນ. ການລາຍງານຂ່າວແບບສືບສວນຍັງເກີດຜົນກະທົບຕໍ່ສັງຄົມຫຼາຍກວ່າຂ່າວປົກກະຕິອີກດ້ວຍ, ສັງເກດເຫັນໃນແງ່ມູມນີ້ ຈະພົບຄວາມແຕກຕ່າງລະຫວ່າງການລາຍງານຂ່າວປົກກະຕິກັບການລາຍງານຂ່າວສືບສວນຢ່າງຊັດເຈນ.

ໃນວົງການແຫ່ງວິຊາຊີບຂອງສື່ມວນຊົນເອີ້ນການລາຍງານຂ່າວປະເພດນີ້ວ່າ: ຂ່າວເຈາະ ຫຼືວ່າການລາຍງານຂ່າວສືບສວນຈຶ່ງເປັນຂ່າວທີ່ໄດ້ມາດ້ວຍການສືບຄົ້ນ, ຂຸດເຈາະເລື່ອງລາວ ອອກມາຢ່າງຕໍ່ເນື່ອງ. ການທີ່ຄວາມຈິງຂອງຂ່າວຖືກເປີດເຜີຍຕາມລຳດັບ ເຮັດໃຫ້ເກີດຄວາມສົນໃຈຕິດ

ຕາມ ແລະວິພາກວິຈານຢ່າງກວ້າງຂວາງ ແລະນຳໄປສູ່ການປັບປຸງ, ປ່ຽນແປງ ຫຼື ຢຸດຕິເລື່ອງ ນັ້ນ, ຮ່ວມທັງການດຳເນີນການເອົາຜິດລົງໂທດຜູ້ກ່ຽວຂ້ອງ. ການລາຍງານຂ່າວສືບສວນນີ້ ຜູ້ສື່ຂ່າວຈະຕ້ອງໄດ້ລົງເລິກເຂົ້າໄປເຖິງຕົ້ນຕໍຂອງເລື່ອງຈົນຮອດຜູ້ຢູ່ເບື້ອງຫຼັງຂອງເຫດການນັ້ນ. ນອກຈາກມີແຫຼ່ງຂ່າວຕົວບຸກຄົນຢືນຢັນຄວາມຖືກຕ້ອງຂ່າວແລ້ວ ຮວມໄປເຖິງການເກັບກູ້ຂໍ້ມູນ, ຮວບຮວມເອກະສານທີ່ສາມາດພິສູດໄດ້ວ່າ ເລື່ອງທີ່ເກີດຂຶ້ນເປັນຄວາມຈິງທຸກປະການອີກດ້ວຍ. ດ້ວຍເຫດນັ້ນ ຈຶ່ງເຮັດໃຫ້ຜູ້ສື່ຂ່າວສືບສວນມັກຈະຖືກປຽບທຽບເປັນນັກຂຸດຄົ້ນເລື່ອງ. ດັ່ງນັ້ນ ການລາຍງານຂ່າວສືບສວນຈຶ່ງເປັນການລາຍງານຂ່າວທີ່ຕ້ອງການຄວາມສາມາດ ແລະ ຄວາມອົດທົນພະຍາຍາມອີກແບບໜຶ່ງ. ໂດຍຜູ້ລາຍງານຂ່າວພະຍາຍາມຂຸດຄົ້ນເອົາຂໍ້ຄວາມຈິງທີ່ເຊື່ອງຊ້ອນຢູ່ໃນສະຖານທີ່ຕ່າງໆມາຕີຄວາມໝາຍໃຫ້ເກີດຄວາມກະຈ່າງແຈ້ງຕໍ່ກັບຜູ້ອ່ານ. ບາງເທື່ອ ຄວາມເລິກລັບທັງຫຼາຍນັ້ນເປັນພິດເປັນໄພຕໍ່ກັບສັງຄົມ. ສິ່ງເຫຼົ່ານີ້ ເມື່ອຖືກເປີດເຜີຍອອກມາແລ້ວຈະເຮັດໃຫ້ມີການດຳເນີນການຕາມກົດໝາຍ, ຂໍ້ບັງຄັບ...

ດັ່ງທີ່ພວກເຮົາໄດ້ຮູ້ດີແລ້ວວ່າ ໃນປັດຈຸບັນ, ສະພາບສັງຄົມແຕ່ລະແຫ່ງເຕີບໃຫຍ່ຂະຫຍາຍຕົວຂຶ້ນເລື້ອຍໆ ແລະມີປະຊາກອນຫຼາຍຂຶ້ນ. ຄວາມສຳພັນລະຫວ່າງບຸກຄົນ, ລະຫວ່າງອົງກອນທາງພາກລັດ ແລະເອກະຊົນຂະຫຍາຍຕົວສະຫຼັບຊັບຊ້ອນ, ຄວາມຫຍຸ້ງຍາກສັບສົນຂອງກິດຈະກຳທາງການເມືອງ, ເສດຖະກິດ ພາຍໃຕ້ສະພາບການດັ່ງກ່າວ ການມີສື່ມວນຊົນໄວ້ເຮັດໜ້າທີ່ລາຍງານເຫດການຕ່າງໆໃຫ້ສະມາຊິກໃນສັງຄົມໄດ້ຮັບຮູ້ຢ່າງທັນທີເປັນຄວາມຈຳເປັນຢ່າງຍິ່ງໃນໂລກຂອງການແຂ່ງຂັນທີ່ກຳລັງພັດທະນາໄປຂ້າງໜ້າ, ແຕ່ຂະນະດຽວກັນ ການຕິດຕາມການກວດສອບຄວາມຖືກຕ້ອງຄວາມຈິງໃນທຸກໆດ້ານຖືວ່າມີຄວາມສຳຄັນຫຼາຍ. ດ້ວຍເຫດນີ້ ການເຮັດໜ້າທີ່ຂອງສື່ມວນຊົນໂດຍການລາຍງານຂ່າວທຸກເຫດການຕາມກະແສຂ່າວໄປໃນວັນໆຈຶ່ງບໍ່ພຽງພໍການລາຍງານຂ່າວສືບສວນແບບເຈາະເລິກຈຶ່ງມີຄວາມຈຳເປັນຢ່າງຍິ່ງເພື່ອໃຫ້ຜູ້ຮັບຂ່າວສານໄດ້ຂໍ້ມູນທີ່ຖືກຕ້ອງເພື່ອຄວາມເປັນທຳໃນສັງຄົມທີ່ສຸດ.

## 4. ຄວາມເຂົ້າໃຈຕໍ່ກັບຂ່າວສືບສວນ

ໃນແຕ່ລະມື້ແຕ່ລະວັນທີ່ພວກເຮົາເບິ່ງໂທລະພາບ, ຟັງວິທະຍຸ, ອ່ານໜັງສືພິມ ຈະພົບວ່າຂ່າວສານດ້ານຕ່າງໆເກີດຂຶ້ນຫຼາຍຈົນບໍ່ສາມາດຈະໄຈ້ແຍກໄດ້ທົ່ວເຖິງ. ສັງຄົມປັດຈຸບັນມີລັກສະນະສັບສົນ, ຊັບຊ້ອນ, ຫວັງແຕ່ຈະເອົາປຽບ ແລະທຳລາຍກັນທຸກວິທີທາງ. ຄົນທີ່ໄດ້ປຽບສາມາດຄວບຄຸມກົນໄກຂອງສັງຄົມ, ເປີດເຜີຍສິ່ງທີ່ດີງາມແຕ່ເຊື່ອງຊ້ອນຄວາມຊົ່ວຮ້າຍໄວ້; ຍິ່ງສະຫຼາດເທົ່າໃດຍິ່ງສາມາດເຊື່ອງຊ້ອນຄວາມຊົ່ວຮ້າຍໄວ້ຫຼາຍເທົ່ານັ້ນ ແຕ່ສິ່ງເຫຼົ່ານັ້ນກໍຖືກເປີດເຜີຍໂດຍສື່ມວນຊົນ. ໂດຍສະເພາະ ໜັງສືພິມທີ່ມີວິທີການຂຽນຂ່າວສືບສວນ (Investigative Reporting).

ດ້ວຍສະພາບຂອງສັງຄົມໃນປັດຈຸບັນນີ້ເອງ ເຮັດໃຫ້ມີສຽງຮຽກຮ້ອງຕໍ່ໜັງສືພິມ, ວິທະຍຸ, ໂທລະພາບໃຫ້ເພີ່ມຄວາມສົນໃຈ ແລະເອົາຈິງເອົາຈັງກັບການລາຍງານຂ່າວສືບສວນຢ່າງຈິງຈັງ.

ເນື້ອຫາຂອງຂ່າວທີ່ນຳມາສະເໜີນັ້ນ ປະຊາຊົນຈຳເປັນຕ້ອງຮູ້ (Need to know) ເພື່ອຈະກະຕຸ້ນໃຫ້ມີຄວາມຮັບຜິດຊອບຕໍ່ສັງຄົມ ແລະປະເທດຊາດຫຼາຍຂຶ້ນ. ເນື້ອຫາເຫຼົ່ານີ້ ກໍຈະຊ່ວຍກະຕຸກຊຸກຍູ້ ແລະເສີມສ້າງໃຫ້ຜູ້ອ່ານເກີດຄວາມຄິດທີ່ເປັນປະໂຫຍດຕໍ່ການພັດທະນາປະເທດ, ສະເໜີຄວາມຄິດເຫັນ ແລະອະທິບາຍຄວາມໝາຍຂອງຂ່າວຫຼາຍກວ່າພາລະໜ້າທີ່ອື່ນ ເຊິ່ງນຳເອົາຂໍ້ມູນຄວາມຈິງທີ່ເກີດເປັນຂ່າວ ແລະພູມຫຼັງຂອງຂ່າວມາສະແດງ (Backgrounds) ມາອະທິບາຍໃຫ້ຜູ້ອ່ານໄດ້ເຂົ້າໃຈເຖິງຄວາມເປັນມາຂອງເຫດການທີ່ເປັນຂ່າວໃຫ້ໄດ້ຮັບຊາບ.

**5. ອົງປະກອບຂອງຂ່າວສືບສວນ**

ລັກສະນະຂອງຂ່າວທີ່ຈັດວ່າເປັນຂ່າວສືບສວນໃນຄວາມຄິດຂອງຜູ້ອ່ານຄືຂ່າວທີ່ມີອົງປະກອບອົງປະກອບຕ່າງໆດັ່ງຕໍ່ໄປນີ້:

*1. **ມີຄວາມເລິກ:*** ໂດຍລົງໄປສຳພັດຂໍ້ມູນຄວາມຈິງໃນເລື່ອງທີ່ເກີດຂຶ້ນ. ບໍ່ແມ່ນຂ່າວທີ່ໄດ້ມາຈາກການບອກເຫຼົ່າເທົ່ານັ້ນ, ຕ້ອງເປັນຂໍ້ມູນຈິງທີ່ໄດ້ມາຈາກການຂຸດເຈາະ, ສືບຄົ້ນຫາຈົນມີຫຼັກຖານພິສູດໄດ້ວ່າ ເລື່ອງທີ່ໜັງສືພິມນຳມາລາຍງານກັບເຫດການທີ່ເກີດຂຶ້ນເປັນເລື່ອງດຽວກັນ.

✓ *2. **ມີຄວາມກວ້າງ:*** ກ່ຽວຂ້ອງກັບບຸກຄົນ, ອົງກອນຫຼາຍກວ່າຂ່າວປົກກະຕິ, ເປັນຂ່າວທີ່ຄົນສ່ວນໃຫຍ່ໃນສັງຄົມໃຫ້ຄວາມສົນໃຈ ແລະ ຕິດຕາມ.

✓ *3. **ມີຄວາມສັບຊ້ອນ:*** ມີປະເດັນ ຫຼື ແງ່ມູມຂອງຂ່າວຫຼາຍບັນຫາ. ຄວາມສັບຊ້ອນ ຫຼື ອາດຈະເພີ່ມຄວາມສັບຊ້ອນຂອງບັນຫາໃໝ່ໃຫ້ເກີດຂຶ້ນຕະຫຼອດ.

✓ *4. **ມີຄວາມແຮງ:*** ຫຼື ພະລັງກວ່າຂ່າວປົກກະຕິ, ເອົາຈິງເອົາຈັງໜັກແໜ້ນ, ໜ້າເຊື່ອຖື. ຜົນກະທົບຂອງຂ່າວຕ້ອງເປັນວົງກວ້າງ, ບໍ່ສະເພາະເຈາະຈົງພຽງແຕ່ຄົນຄົນດຽວ ຫລື 2 - 3 ຄົນ.

*5. **ມີຄວາມຕໍ່ເນື່ອງ:*** ໃນການຕິດຕາມ ແລະນຳສະເໜີຕິດຕໍ່ກັນເປັນເວລາດົນ ເຊິ່ງບໍ່ສາມາດຈຳກັດໄດ້ແນ່ນອນວ່າເປັນເວລາເທົ່າໃດ ຂຶ້ນຢູ່ກັບພັດທະນາການຂອງຂ່າວວ່າ ມີປະເດັນຫຼາຍ, ໜ້ອຍຊ່ຳໃດ. ການຕິດຕາມການລາຍງານຂ່າວຕ້ອງເກາະຕິດຕໍ່ເນື່ອງ ຫຼື ເອີ້ນວ່າ "ກັດບໍ່ປ່ອຍ" ຄວາມສຳເລັດຂອງຂ່າວໃນລັກສະນະນີ້ຂຶ້ນກັບຄວາມຕໍ່ເນື່ອງຂອງຂ່າວເຊັ່ນກັນ.

✓ *6. **ຄວາມເປັນຂ່າວດຽວ:*** ຫຼື ຮຽກວ່າ "Exclusive" or "Scoop" ທີ່ໄດ້ນຳມາ ແລະ ສະເໜີພຽງແຕ່ສະບັບດຽວກ່ອນ. ໜັງສືພິມອື່ນບໍ່ມີ ຫຼື ມີກໍເປັນການນຳສະເໜີຕິດຕາມມາໃນພາຍຫຼັງ.

✓ *7. **ມີລັກສະນະເປີດໂປງ:*** ມີການຂຸດຄົ້ນນຳເອົາຫຼັກຖານເອກະສານຂໍ້ມູນມາຢືນຢັນພິສູດໄດ້ຢ່າງຊັດເຈນ. ສະທ້ອນການຕໍ່ສູ້ເພື່ອຄວາມຖືກຕ້ອງເປັນທຳ, ບໍ່ຍອມຈຳນົນຕໍ່ຄວາມປົດເປືອນ ຫຼື ປິດກັ້ນຂໍ້ມູນຄວາມຈິງ.

✓ *8. **ຫາຂໍ້ຍຸດຕິໄດ້:*** ຫຼັງຈາກຄວາມຈິງຖືກຄົ້ນພົບ ແລະນຳອອກມາເຜີຍແຜ່ເຮັດໃຫ້ເກີດຄວາມປ່ຽນແປງເຊັ່ນ ມີການສອບສວນດຳເນີນການກັບຜູ້ກ່ຽວຂ້ອງ, ບໍ່ວ່າຈະຄະດີແພ່ງ, ອາຍາ ຫຼື ທາງວິ

ໃນຜູ້ກະທຳຜິດໄດ້ຮັບການລົງໂທດຕິຕຽນ ແລະໄດ້ຮັບການລົງໂທດຈຳຄຸກຕາມກົດລະບຽບຂໍ້ບັງຄັບທີ່ວາງອອກ, ມີການປັບປຸງແກ້ໄຂ ແລະເຮັດໃຫ້ເກີດຄວາມຈະແຈ້ງໃນເລື່ອງນັ້ນໃນທີ່ສຸດ.

**6. ຄວາມສົມບູນຂອງຂ່າວສືບສວນ**

ຂ່າວສືບສວນທີ່ດີ ແລະມີຄວາມສົມບູນ, ຜູ້ສື່ຂ່າວຕ້ອງໃຊ້ຄວາມພະຍາຍາມ, ມີຄວາມອົດທົນ, ເຮັດວຽກຢ່າງເປັນລະບົບ, ມີຄວາມເລິກເຊິ່ງ, ມີການວິເຄາະຢ່າງຮອບດ້ານ. ບົນພື້ນຖານຂອງຄວາມເປັນກາງ, ມີຈິດໃຈຮັກຄວາມເປັນທຳ, ຕ້ອງການເຫັນຄວາມຍຸຕິທຳ ແລະຄວາມຖືກຕ້ອງຄົງຢູ່ໃນສັງຄົມ ໂດຍການສືບຄົ້ນຫາຄວາມຈິງມາເປີດເຜີຍໃຫ້ເຫັນເຖິງທາດແທ້.

ຫາກນຳເອົາຫຼັກການປະເມີນມູນຄ່າຂອງຂ່າວມາພິຈາລະນາຄຸນສົມບັດຂອງຂ່າວສືບສວນຈະເຫັນໄດ້ວ່າ ໃນບັນດາຄຸນສົມບັດຂອງຂ່າວທີ່ດີ 10 ປະການ. ຂ່າວສືບສວນຈະມີຄຸນສົມບັດ ເຫຼົ່ານີ້ຢ່າງຄົບຖ້ວນຫຼາຍກວ່າຂ່າວປົກກະຕິທົ່ວໄປ.

1. ຄວາມສົດຂອງຂ່າວ (Immediacy)
2. ຄວາມໃກ້ຊິດ (Proximity)
3. ຄວາມເດັ່ນ (Promiece)
4. ຄວາມຜິດປົກກະຕິ (Unusualness)
5. ສິ່ງທີ່ມະນຸດສົນໃຈ ຫຼື ເປັນປະໂຫຍດຕໍ່ມະນຸດ (Human Interest)
6. ຄວາມຂັດແຍ່ງ (Conflict)
7. ຄວາມເລິກລັບຊັບຊ້ອນ (Suspense)
8. ຄວາມກະທົບກະເທືອນ (Consequence)
9. ຄວາມກ້າວໜ້າ (Progrese)
10. ເພດ (Sex)

ແຕ່ຫາກພິຈາລະນາຕາມຫຼັກການຂອງສະມາຄົມນັກຂ່າວສືບສວນສອບສວນ ແລະບັນນາທິການຂອງສະຫະລັດອະເມຣິກາ (IRE or Investigative Reporter and Editors USA) ມີລັກສະນະ ຫຼື ອົງປະກອບຄຸນສົມບັດຂອງຂ່າວສືບສວນມີ 3 ປະການຄື:

1. ເປັນການເຈາະຂ່າວໂດຍນັກຂ່າວເອງ, ບໍ່ແມ່ນຜົນສະຫຼຸບຈາກຂ່າວຂອງຜູ້ອື່ນ ຫຼື ກຸ່ມຄົນໃດ.

2. ເປັນເລື່ອງກ່ຽວຂ້ອງ ຫຼື ມີຄວາມສຳຄັນພຽງພໍຕໍ່ການຮັບຮູ້ຂອງຜູ້ອ່ານ.

3. ເປັນເລື່ອງທີ່ບຸກຄົນ ຫຼື ບາງອົງກອນມີຄວາມພະຍາຍາມທີ່ຈະປິດບັງຂໍ້ມູນບໍ່ໃຫ້ປາກົດຕໍ່ສາທາລະນະ.

### 7. ຄຳຈຳກັດຄວາມຂອງຂ່າວສືບສວນ

ກອງປະຊຸມສຳມະນາຜູ້ສື່ຂ່າວເລື່ອງ: ການລາຍງານຂ່າວສືບສວນສອບສວນ ເມື່ອວັນທີ 26-28 ພຶດສະພາປີ ພ.ສ 2537 ທີ່ໂຮງແຮມດຸສິດລີສອດສະອຳໂດຍສະມາຄົມນັກຂ່າວແຫ່ງປະເທດໄທຮ່ວມກັບ Feerdom Forum. ໄດ້ເຊີນຜູ້ສື່ຂ່າວສືບສວນສອບສວນຈາກ ສະຫະລັດອາເມຣິກາ ແລະຟີລິບປິນ ມາຮ່ວມສຳມະນາດ້ວຍ.

David Kaplan ອະດີດບັນນາທິການຂ່າວ ແລະບັນນາທິການບໍລິຫານຂອງ Center for Investigative **Reporting** ທີ່ຊານຟຣານຊິສໂກ ເຄີຍເປັນຜູ້ສື່ຂ່າວອະເມຣິກາທີ່ມີປະສົບການ ແລະຊຳນານໃນການຂຽນຂ່າວສືບສວນສອບສວນໄດ້ຮວບຮວມຄຳຈຳກັດຄວາມຂອງຂ່າວສືບສວນສອບສວນດັ່ງນີ້:

1. Systematic Inquiry and Critque ຫຼື ການສືບສວນ ແລະວິເຄາະຢ່າງເປັນລະບົບຄຳວ່າ "Investigate" ຖ້າຫາກເປີດວັດຈະນານຸກົມຈະບອກວ່າ ການສືບສວນ ຢ່າງເປັນລະບົບແຕ່ເຮົາຕື່ມຄຳວ່າ "Critique" ເພາະເຮົາຈະໄດ້ວິໄຈເລື່ອງໄດ້ຄືກັບ ທ່ານ ໝໍ ທີ່ສາມາດບົ່ງມະຕິພະຍາດຂອງຄົນເຈັບໄດ້ຢ່າງຖືກຕ້ອງຄືການຄົ້ນຄິດຢ່າງເປັນລະບົບ.

ຕົວຢ່າງ: ເລື່ອງພື້ນຖານເລື່ອງໜຶ່ງຄື ການລາຍງານຂ່າວໄຟໄໝ້. ບັນນາທິການບອກໃຫ້ເຈົ້າໄປເອົາຂ່າວ ໄຟໄໝ້, ເຈົ້າສາມາດທີ່ຈະລາຍງານຂ່າວໃນວັນນັ້ນໄດ້ວ່າ ໄຟໄໝ້ຄັ້ງນີ້ເສຍຫາຍເທົ່າໃດ? ມີລົດດັບເພີງຈັກຄັນ ແລະອື່ນໆ ເທົ່ານັ້ນກໍຖືວ່າສຳເລັດແລ້ວແຕ່ເຈົ້າອາດຈະເກີດຄວາມຄິດຂຶ້ນມາໃນຄວາມຮູ້ສຶກວ່າ ເຄື່ອງໄມ້ເຄື່ອງມືດັບເພີງບໍ່ພໍເຮັດໃຫ້ການດັບໄຟຊ້າ ກວ່າເກີນຄວາມເປັນໄປ ຫຼື ໄຟໄໝ້ຄັ້ງ ນີ້ບໍ່ແມ່ນອຸບັດເຫດ ແຕ່ເປັນການວາງເພີງ ຫຼື ເປັນການວາງ ເພີງກ່ຽວພັນກັບການວາງເພີງຄັ້ງອື່ນໆ ຫຼືບໍ່ ຫຼື ສະຖານີດັບໄຟມາຊ້າເຊິ່ງມັນຈະເປັນບັນຫາ. ສະຖານີດັບເພີງສິ່ງເຫຼົ່ານີ້ຄືຈຸດເລີ່ມຕົ້ນທີ່ສຳຄັນຂອງການເຮັດຂ່າວສືບສວນທີ່ດີຕໍ່ໄປ.

2. In Depth long term **Research and Reporting** ຫຼື ການຄົ້ນຄ້ວາ ແລະລາຍງານຂ່າວ ຢ່າງເຈາະເລິກທີ່ໃຊ້ເວລາຍາວນານ, ບາງຄັ້ງໃຊ້ເວລາເປັນອາທິດ, ເປັນເດືອນ ແລະບາງເທື່ອອາດຈະເປັນປີ.

3. Tenacious and Detemined Digging ການຂຸດຄົ້ນຫາ ແລະກັດບໍ່ປ່ອຍ. ນັກຂ່າວທີ່ຈະເປັນນັກຂ່າວສືບສວນທີ່ດີ, ປົກກະຕິນອກຈາກຈະມັກສົງໃສແລ້ວຍັງດື້ນຳອີກ, ມີຄວາມເຊື່ອໃນຕົວເອງບາງຢ່າງ.

4. Documentary Reseach the use of Rublic Records, Following the paper Trail ການຄົ້ນຄ້ວາເອກະສານ, ການນຳໃຊ້ເອກະສານບັນທຶກສະຖານນະການ. ໃນທີ່ນີ້ແມ່ນເອກະສານຕ່າງໆ ຂອງລັດຖະບານທີ່ຈຳເປັນຕ້ອງເປີດເຜີຍສາທາລະນະ, ຕ້ອງໃຊ້ສິ່ງເຫຼົ່ານີ້ໃຫ້ເປັນປະໂຫຍດ. ລອງເບິ່ງເອກະສານທີ່ເປີດເຜີຍແລ້ວນຳມາລຽງຕາມລຳດັບຂອງເຫດການໄປ.

ເອກະສານທີ່ເປັນລາຍລັກອັກສອນເຫຼົ່ານັ້ນເປັນເລື່ອງສຳຄັນຫຼາຍ, ບໍ່ວ່າຈະເປັນຄຳຕັດສິນຂອງສານ. ເອກະສານຂອງສານຍຸຕິທຳ, ເອກະສານຂອງບໍລິສັດໃຫຍ່ໆລາຍງານການເງິນ ແລະ ຄວາມດຸນດ່ຽງຕ່າງໆ. ບາງຄົນບອກວ່າ ເຮົາຕ້ອງມີແຫຼ່ງຂ່າວທີ່ໜ້າເຊື່ອຖື ແລະເອກະສານເຫຼົ່ານີ້ເປັນສິ່ງທີ່ສຳຄັນຫຼາຍໃນການສ້າງຄວາມເຊື່ອຖື.

5. Extensive Interviewing ການສຳພາດຄົນໃຫ້ກວ້າງຂວາງທີ່ສຸດ.

6. Serving as acourt of last Resort offering a Voice to those Unheard.

ໃນອັນດັບທີ 6 ບົດບາດຂອງຂ່າວສືບສວນສອບສວນບາງເທື່ອສາມາດ ເປັນດັ່ງສິ່ງ ສຸດທ້າຍທີ່ເຮົາອາໄສເພື່ອ ຄວາມຍຸຕິທຳຂອງຄົນທີ່ເຄາະຮ້າຍ ຫຼື ຖືກກ່າວຫາຢ່າງບໍ່ເປັນທຳໄດ້.

ປົກກະຕິ ເລື່ອງທີ່ສານຕັດສິນໄປແລ້ວກໍຖືວ່າຖືກຕ້ອງທີ່ສຸດ, ບໍ່ມີໃຜສົນໃຈເລື່ອງທີ່ຖືກຕັດສິນ, ຈົນໃນທີ່ສຸດ... ນອກຈາກນັກໜັງສືພິມ. ເລື່ອງຈຳພວກນີ້ ສ່ວນຫຼາຍເປັນເລື່ອງຄວາມບໍ່ເປັນທຳໃນສັງຄົມ. ນັກໜັງສືພິມໃນສະຫະລັດອາເມຣິກາຫຼາຍຄົນສົນໃຈໃນປະເດັນດັ່ງກ່າວນີ້ຫຼາຍກວ່າ, ຈະເຮັດແບບໃດເພື່ອເປັນສິ່ງສຸດທ້າຍທີ່ເຮົາອາໄສຫຼັງຈາກສານບັນຍັດຍຸຕິທຳ.

7. Doing Stories not covered by the Rest of the News Media ບາງເທື່ອໜັງສືພິມ ກໍເບິ່ງຂ້າມເລື່ອງບາງເລື່ອງເຊັ່ນ: ບັນຫາຊົນເຜົ່າກຸ່ມນ້ອຍໃນອາເມຣິກາເປັນເລື່ອງທີ່ຖືກເບິ່ງຂ້າມ, ບໍ່ເຄີຍມີບົດລາຍງານຂ່າວກ່ຽວກັບຊົນເຜົ່າກຸ່ມນ້ອຍມາເປັນປີໆ. ຊຸມຊົນຄົນທຸກຍາກກໍບໍ່ໄດ້ຢູ່ໃນ ຄວາມສົນໃຈຂອງສື່ມວນຊົນ; ຂ່າວໃດຍາກໆບາງເທື່ອກໍຍົກເລີກໄປຊື່ໆ ເພາະຄວາມຫຍຸ້ງຍາກລຳບາກໃນການທີ່ຈະຕິດຕາມ. ໃນສະຫະລັດອາເມຣິກາ ມີຂ່າວໃຫຍ່ກ່ຽວກັບຄວາມລົ້ມລະລາຍຂອງລະບົບສະສົມຊັບກັບການໃຫ້ກູ້ຢືມເງິນ. ຄວາມຈິງແລ້ວກໍຄື ລະບົບທະນາຄານໜັງສືພິມທົ່ວໆໄປ ກໍລາຍງານຂ່າວຂະຫຍາຍກ່ຽວກັບຄວາມລົ້ມລະລາຍຂອງລະບົບນີ້ ແຕ່ David Kaplan ກ່າວວ່າ ໜັງສືພິມຂອງຕົນເນັ້ນໃສ່ເລື່ອງວິທີການແກ້ໄຂ ເຊິ່ງປາກົດວ່າ ກົບງົບປະມານເຂົ້າໄປຫຼາຍເທົ່າ ຂອງຄວາມເສຍຫາຍທີ່ເກີດຈາກໂຕບັນຫາເອງ. ເລື່ອງແບບນີ້ ເປັນເລື່ອງຍາກແສນຍາກໃນການທີ່ ຈະເຮັດໃຫ້ປະຊາຊົນເຂົ້າໃຈວ່າໂຕບັນຫາແທ້ໆນັ້ນຢູ່ໃສ? ໜັງສືພິມຂອງຕົນໃຊ້ເວລາເຖິງ 6 ເດືອນ ກວ່າຈະຄິດອອກວ່າ ຈະຫາວິທີບອກກັບປະຊາຊົນໄດ້ແບບໃດ?

8. Exposing Information Others **want kept Secret** ໃນສັງຄົມປະຊາທິປະໄຕ ບໍ່ໜ້າຈະມີເລື່ອງຫຍັງທີ່ເປັນຄວາມລັບ, ມີແຕ່ບາງເລື່ອງເທົ່ານັ້ນທີ່ລັດ ຖະບານສາມາດຮັກສາໄວ້ເປັນຄວາມລັບໄດ້. ເພາະສະນັ້ນ ຄວາມລັບກໍມີຄວາມໝາຍອີກແບບໜຶ່ງວ່າ ມີຄວາມປົດບັງ, ເຊື່ອງຊ້ອນສິ່ງທີ່ຜິດພາດບົກພ່ອງ.

9. Bringing Together Disparate Information in to a Cohesive Whole ການຫາຂໍ້ ມູນທີ່ກະແຈກກະຈາຍມາຕໍ່ໃຫ້ເປັນເລື່ອງເປັນຄວາມ. ບາງກໍລະນີ ບໍ່ແມ່ນ 2 + 2 ເປັນ 4

ແຕ່ພັດ ເປັນທ້າ, ບາງເທື່ອກໍ່ຄືການເປີດເຜີຍສິ່ງທີ່ຄົນຕ້ອງການໃຫ້ເປັນຄວາມລັບເຊັ່ນ: ເລື່ອງໄຟໄໝ້ ຖ້າເຮົາພຽງແຕ່ໄປນຳຂໍ້ມູນບາງອັນຈາກສະຖານີດັບເພີງທຸກແຫ່ງໃນຕົວເມືອງມາຕິດຕໍ່ກັນເຈົ້າອາດຈະພົບຫຍັງບາງຢ່າງທີ່ອະທິບາຍໄດ້ວ່າ ເປັນຫຍັງສາຍຢາງມັນຂາດ ຫຼື ເກີດຫຍັງບົກພ່ອງ.

10. Groundbreaking Revelatory Reporting that Adds Significantly to the public Record and public Debate ເປັນການລາຍງານຂ່າວທີ່ເປີດເຜີຍປະເດັນຂຶ້ນມາໃໝ່ເພື່ອຈະໃຫ້ຂໍ້ມູນໃໝ່ແກ່ສາທາລະນະຊ່ວຍເພີ່ມເຕີມການຖົກຖຽງຂອງສາທາລະນະກ່ຽວກັບເລື່ອງນັ້ນໆ. ດັ່ງຂ່າວ ວໍເຕີເກດໃນສະຫະລັດອາເມຣິກາ ເຊິ່ງມີການເປີດແງ່ມູມໃໝ່ໆ ກ່ຽວກັບເລື່ອງຊ່າລືເຊິ່ງເປັນຂ່າວໃຫຍ່ນີ້.

11. Watehdogging power focusing on the Accountability of Individuals and Institutions that **wied power** ຄືຄວາມສຳຄັນຂອງໝາເຝົ້າເຮືອນ. ຈຸດນີ້ເປັນສິ່ງທີ່ David Kaplan ໃຫ້ຄວາມສຳຄັນສູງສຸດ, ແຕ່ສຳລັບ Kaplan ແລ້ວການເຮັດຂ່າວສືບສວນສອບສວນ ແມ່ນໜ້າທີ່ຂອງສື່ມວນຊົນທີ່ຈະຕ້ອງຕັ້ງຄຳຖາມວ່າ ອົງກອນຕ່າງໆ ທີ່ມີອຳນາດຢູ່ໃນສັງຄົມໄດ້ໃຊ້ອຳນາດນັ້ນຢ່າງໃສແຈ້ງ ແລະຕອບສະໜອງຕໍ່ຫຼັກການນະໂຍບາຍຕ່າງໆ ໄດ້ຢ່າງຖືກຕ້ອງ ຫຼືບໍ່.

ຄຳຖາມທີ່ເຮົາຕັ້ງ ບໍ່ວ່າຈະຖາມກັບນັກການເມືອງ, ຜູ້ນຳບໍລິສັດໃຫຍ່ໆທີ່ມີອິດທິພົນ, ຜູ້ນຳທີ່ມີບົດບາດ ຫຼື ເຈົ້າພໍ່ຄົນໃດຄົນໜຶ່ງກໍ່ຕາມ, ເຂົາຈະຖືກຖາມດ້ວຍຄຳຖາມດຽວກັນວ່າ ເຂົາໄດ້ໃຊ້ອຳນາດທີ່ມີຢູ່ໃນທາງທີ່ສາມາດຈະຕອບປະຊາຊົນ ຫຼື ຄົນສ່ວນໃຫຍ່ໄດ້ ຫຼືບໍ່?

## 8. ການຂ່າວສືບສວນໃຫ້ຄວາມຈິງທີ່ແອບແຝງເລິກລັບເປີດເຜີຍອອກມາ

### 8.1. ເຮັດແນວໃດ...ຈຶ່ງສາມາດແກ້ໄຂຄວາມຫຍຸ້ງຍາກ

ຈາກທີ່ກ່າວມາແລ້ວວ່າ ການລາຍງານຂ່າວສືບສວນສອບສວນເປັນຂະບວນການໃນການປະຕິບັດສືບຕໍ່ກັນມາ, ນັບຕັ້ງແຕ່ການຄິດປະເດັນຂ່າວ, ການສະແຫວງຫາຂໍ້ມູນຈົນເຖິງການລາຍງານອອກໄປສູ່ການຮັບຮູ້ຂອງມວນຊົນ (ປະຊາຊົນ). ການລາຍງານຂ່າວສືບສວນສອບສວນຈຶ່ງເປັນຄວາມຮູ້ ແລະສິລະປະຄູ່ກັນໄປ. ຄວາມສັງຫອນໃຈ (Hunch) ຕໍ່ກັບເຫດການທີ່ເກີດຂຶ້ນ ຫຼື ໄດ້ປະເດັນຂ່າວ (Tip) ຈາກການທີ່ມີຜູ້ຊີ້ສາເຫດ (Hint) ໂດຍບອກເຖິງທາງຄຳເວົ້າ ຫຼື ສິ່ງເອກະສານຂໍ້ມູນມາໃຫ້ ຫຼື ອາດມີນັກຂ່າວ ຫຼື ໃຜກໍ່ຕາມໃນກອງບັນນາທິການເກີດຄວາມສົງໃສ ຫຼື ສັງຫອນໃຈໃນເລື່ອງທີ່ໄດ້ຍິນ, ໄດ້ອ່ານ. ພົບວ່າ ອາດມີຫຍັງແອບແຝງຢູ່ອີກ, ອາດເປັນເພາະເຫດນັ້ນເຫດນີ້.

### 8.2. ສິ່ງທີ່ເກີດຂຶ້ນນີ້ ເຮົາມັກເອີ້ນວ່າ ແນວທາງນັ້ນເອງ

#### 8.2.1 ເລື່ອງແນວທາງທີ່ຂະຫຍາຍອອກໄປຈຶ່ງເປັນສິ່ງສຳຄັນຂອງການເຮັດຂ່າວສືບສວນ

ຕົວຢ່າງ: ເຫດການຄົນຮ້າຍງັດຕຶກວໍເຕີເກດເຂົ້າໄປໃນຫ້ອງເຮັດວຽກຂອງສຳນັກງານຫາສຽງເລືອກຕັ້ງປະທານາທິບໍດີຂອງພັນຣິດເດໂມເກດ ຖືກປ້ອງກັນທີ່ຍາມຢູ່ບໍລິເວນນັ້ນຈັບກຸມ ເຊິ່ງເປັນຂ່າວນ້ອຍໆທຳມະດາເປັນຂ່າວທົ່ວໆໄປຂອງສາຍຕາໜັງສືພິມ.

ຈາກຄວາມສົງໃສເຮັດໃຫ້ 2 ນັກຂ່າວຫົວກະທິນຳໄປຫາລືກັບທ່ານ ເບນແບດລີ ຫົວໜ້າກອງບັນນາທິການ. ນັກຂ່າວ 2 ຄົນນີ້ມີຊື່ວ່າ **ບ໋ອບ ວູດເວີດ** ແລະ **ຄາດຣ ເບີນຣສຕີນ** ນັກໜັງສືພິມພ໋າວຊິງຕັນໂພດຣ ເກີດມີຄວາມສົງໃສຄະດີດັ່ງກ່າວວ່າ: ເປັນຫຍັງຕ້ອງມີຂີ້ລັກມາງັດທີ່ເຮັດວຽກການຫາສຽງຂອງພັກການເມືອງ ເພາະບໍ່ມີສິນບັດຫຍັງເລີຍນອກຈາກພິມດີດ ແລະຄົນຂີ້ລັກກໍບໍ່ໄດ້ຄົ້ນຫາຊັບສິນບັດຫຍັງນອກຈາກຊອກຄົ້ນຫາເອກະສານ. ຊ້ຳບໍ່ໜຳ ຄົນຂີ້ລັກທີ່ຖືກຈັບກໍບໍ່ມີສະພາບໂຈນຂີ້ຢາ ຫຼື ພວກຜິດຊິດເຫຼືອງແຕ່ຢ່າງໃດ. ຈາກການສັນນິຖານ ແລະມີຫຼາຍສິ່ງຫຼາຍຢ່າງ ໜ້າສົງໄສ, ບັນນາທິການຈຶ່ງສັ່ງໃຫ້ຂຸດຄົ້ນເລື່ອງລາວແລ້ວເອົາຂ່າວຂຶ້ນໜ້າໜຶ່ງຫົວໃໝ່ທັນທີ. ຂ່າວດັ່ງກ່າວໄດ້ຖືກຂຸດຄົ້ນຄືນ, ຕໍ່ມາຈຶ່ງພົບຄວາມຈິງວ່າ ລູກນ້ອງປະທານາທິບໍດີ ຣິຊາດຣ໌ ນິກສັນ ໃຊ້ຕຳແໜ່ງໜ້າທີ່ໃນທຳນຽບຂ່າວວາງແຜນລັກກະປິກດັກຟັງໂທລະສັບພວກເດໂມແຄຣ ວາງແຜນຕັ້ງແຕ່ງັດຕຶກວໍເຕີເກດເຂົ້າໄປຄົ້ນຄວາມລັບໃນການຫາສຽງຂອງທີ່ເຮັດວຽກຫາສຽງຂອງພັນຣິດເດໂມແກັດ ຈົນປະທານາທິບໍດີ **ນິກສັນ** ຕ້ອງລາອອກຈາກຕຳແໜ່ງ.

ສະນັ້ນ, ເປົ້າໝາຍສຳຄັນສຸດຂອງການລາຍງານຂ່າວສືບສວນກໍຄື ການສະແຫວງຫາຂໍ້ເປັນຈິງນຳມາເຜີຍແຜ່ໃຫ້ສັງຄົມໄດ້ຮັບຮູ້ຫຼາຍທີ່ສຸດເທົ່າທີ່ຈະຫຼາຍໄດ້.

#### 8.1.2. ເຮັດວຽກຕ້ອງມີແຜນ; ຄົນຕ້ອງເປັນທີມ

ການວາງແຜນຂ່າວສືບສວນຈະຕ້ອງປະສານກັນໄປທັງແຜນຂ່າວ ແລະແຜນຄົນຄື ການຊອກຫາຜູ້ສື່ຂ່າວທີ່ມີຄວາມສາມາດເໝາະສົມກັບຂ່າວນັ້ນຕ້ອງເປັນຜູ້ສື່ຂ່າວໃນໜ່ວຍງານປົກກະຕິ ຫຼື ຕັ້ງເປັນທີມງານສະເພາະກິດຂຶ້ນມາແຍກຕ່າງຫາກກັບທີມງານປະຈຳ. ການເຮັດຂ່າວລັກສະນະສືບສວນໃນໄລຍະຜ່ານມາຈະໃຊ້ຜູ້ສື່ຂ່າວສະເພາະກິດຫຼາຍຂຶ້ນ, ເນື່ອງຈາກມີຄວາມຄ່ອງຕົວ, ເປັນອິດສະລະຫຼາຍກວ່າຜູ້ສື່ຂ່າວທີ່ປະຈຳຢູ່ຕາມແຫຼ່ງຂ່າວປົກກະຕິທົ່ວໄປ ແລະຂ່າວທີ່ຕ້ອງໃຊ້ວິທີການລາຍງານຂ່າວລັກສະນະສືບສວນມັກຈະກ່ຽວຂ້ອງກັບບຸກຄົນ, ຫຼາຍຄົນ, ຫຼາຍໜ່ວຍງານ. ການມີທີມງານສະເພາະສາມາດປະສານການຕິດຕາມຂ່າວໄດ້ທັນທີ.

ໜັງສືພິມທີ່ຕ້ອງການລາຍງານຂ່າວສືບສວນຄວນແຍກທີມຜູ້ສື່ຂ່າວອອກມາ ໂດຍສະເພາະນຳໂດຍຜູ້ສື່ຂ່າວອາວຸໂສໃນກອງບັນນາທິການ ເຊິ່ງຜູ້ສື່ຂ່າວລະດັບນີ້ສາມາດເບິ່ງເຖິງຄວາມເປັນໄປໄດ້ໃນການສືບສວນແຫຼ່ງຂ່າວໃຫຍ່ໆ, ຄວາມສາມາດໃນການວິເຄາະເຫດການ, ລາຍງານ

ຂອງລັດຖະບານ, ລາຍງານຂອງອົງກອນຕ່າງໆ, ເອກະສານບາງອັນໃຫ້ Tips ໃນການສືບສວນ. ຂະນະດຽວກັນ ໃນການສືບສວນຈະມີຄົນດີໆໃນອົງກອນນັ້ນໆຕ້ອງການເຫັນຄວາມຍຸຕິທຳ, ບໍ່ຕ້ອງການເຫັນການສໍ້ລາດບັງຫຼວງເກີດຂຶ້ນຕໍ່ໄປ ກໍມັກຈະໄປຫາຜູ້ສື່ຂ່າວເພື່ອຊ່ວຍໃຫ້ເລື່ອງເຫຼົ່ານັ້ນຖືກເປີດເຜີຍອອກມາ. ໂດຍສະເພາະ ການສືບສວນເລື່ອງໃຫຍ່ໆເຊັ່ນ: ໂຄງການຂະໜາດໃຫຍ່ຂອງລັດຖະບານ, ທຸລະກິດຂະໜາດໃຫຍ່, ທຸລະກິດບໍລິສັດຂ້າມຊາດ, ການດຳເນີນກິດຈະກຳຂອງພັກການເມືອງ, ອາດຊະຍະກຳໃຫຍ່ທີ່ຜິດກົດໝາຍມີອິດທິພົນຕໍ່ເຈົ້າໜ້າທີ່ຂອງລັດ. ການກຽມ, ການວາງແຜນໃນການເຮັດຂ່າວສືບສວນເປັນສິ່ງທີ່ຈຳເປັນທີ່ສຸດ. ການວາງແຜນຕິດຕາມຂ່າວເປັນໄປໄດ້ຫຼາຍທາງ, ຜູ້ສື່ຂ່າວຕິດຕາມຂ່າວນັ້ນມາຕັ້ງແຕ່ຕົ້ນ ສາມາດວາງແຜນການຕິດຕາມຂ່າວເປັນການສະເພາະຂອງຕົວເອງ ເຊິ່ງຕ້ອງມີຄວາມສອດຄ່ອງກັບແຜນຂອງບັນນາທິການຂ່າວ ຫຼື ຫົວໜ້າກອງບັນນາທິການເຊິ່ງເປັນແຜນລວມ. ແຜນລວມນີ້ ຜູ້ເກັບກຳແຜນຈະຕ້ອງຮູ້ຂໍ້ມູນທັງໝົດທຸກດ້ານ, ວິເຄາະເລື່ອງລາວໃນລັກສະນະພື້ນຖານຈົນສາມາດຄາດຄະເນທິດທາງຂອງຂ່າວທີ່ຈະເກີດຂຶ້ນວ່າເຫດການຄັ້ງຕໍ່ໄປຈະແກ້ໄຂໄປແນວໃດ. ຂະນະດຽວກັນກໍເປັນຄົນເກັບກຳປະເດັນ ແລະຈັດລຳດັບໃນການຕິດຕາມປະເດັນໃດກ່ອນ, ປະເດັນໃດຫຼັງ ແລະນຳສະເໜີເຫດການໃດກ່ອນ, ເຫດການໃດຫຼັງ. ແຜນການທີ່ດີຈະມີສ່ວນສະໜັບສະໜູນການປະຕິບັດງານຂອງຜູ້ສື່ຂ່າວລັກສະນະສືບສວນໄດ້ຢ່າງດີ ເພາະການໄກ່ເກ່ຍຂອງຂ່າວຈະໄວ ຫຼື ຊ້າຂຶ້ນຢູ່ກັບປະເດັນການນຳສະເໜີ ອອກໄປໃນແຕ່ລະມື້, ຄວາມຈິງຖືກເຜີຍແຜ່ອອກໄປເທື່ອລະໜ້ອຍຈະໄປກົດດັນຜູ້ມີອຳນາດ, ເຈົ້າໜ້າທີ່ໃຫ້ເປີດເຜີຍຂໍ້ມູນທີ່ແອບແຝງປິດບັງຢູ່ອອກມາ. ດຳເນີນການສືບສວນທວນຄວາມຈົນສາມາດລົງໂທດຄົນເຮັດຜິດໃນທີ່ສຸດ.

ໃນນີ້ ແຜນງານຂ່າວສືບສວນຕ້ອງກຳນົດພາລະກິດຂອງແຕ່ລະຝ່າຍໄວ້ຢ່າງຈະແຈ້ງ, ຈະເຮັດໃຫ້ເກີດຄວາມຄ່ອງຕົວໃນການປະຕິບັດຝ່າຍຫາຂ່າວ, ຝ່າຍຂໍ້ມູນ ທັງຂໍ້ມູນກ່ຽວກັບຄວາມຄືບໜ້າຂອງຂ່າວຕາມລຳດັບ, ຂໍ້ມູນລັກສະນະເທັກນິກ ຫຼື ຂໍ້ມູນໃນທາງວິຊາການທີ່ມາສະໜັບສະໜູນການລາຍງານຂ່າວເຊັ່ນ: ການຈັດປະຊຸມສຳມະນາລະດົມຄວາມຄິດຈາກຝ່າຍຕ່າງໆ ກະຕຸ້ນໃຫ້ເລື່ອງລາວຂອງຂ່າວກຳລັງສືບສວນຢູ່ນັ້ນໄດ້ຮັບຄວາມສົນໃຈຈາກສັງຄົມຫຼາຍຂຶ້ນ. ໂດຍສະເພາະຄວາມຮູ້ທາງເທັກນິກວິຊາການ ເຊິ່ງກ່ຽວຂ້ອງກັບຂ່າວນັ້ນມີສ່ວນສຳຄັນ. ຜູ້ສື່ຂ່າວທີ່ມີຄວາມສະເພາະດ້ານຫລາຍເຮັດໃຫ້ມີແງ່ມູມປະເດັນຂ່າວທີ່ຕິດຕາມ. ເລື່ອງນໍ້າເສຍຈາກໂຮງງານອຸດສາຫະກຳ ຖ້າມີຄວາມຮູ້ໃນເລື່ອງຂອງຂະບວນການຜະລິດ. ເລື່ອງສານເຄມີ, ເລື່ອງສານພິດຈະເຮັດໃຫ້ສາມາດຂະຫຍາຍປະເດັນໄປໄດ້ຫຼາຍ. ຫຼື ຜູ້ສື່ຂ່າວທີ່ຕິດຕາມຂ່າວການຫາປະໂຫຍດຈາກການຈັດເຮັດງົບປະມານຢ່າງຖືກຕ້ອງຈະເຮັດໃຫ້ມີປະເດັນຂ່າວທີ່ຈະຕິດຕາມຫຼາຍຂຶ້ນ. ອີກຢ່າງຄວາມຮູ້ໃນເລື່ອງຂອງລະບຽບປະຕິບັດກົດໝາຍຕ່າງໆ ເພາະທຸກເລື່ອງລ້ວນກ່ຽວຂ້ອງກັບບັນຫາຂໍ້ກົດໝາຍ

ທັງໝົດ. ການທີ່ຜູ້ສື່ຂ່າວມີຄວາມຮູ້ກ່ຽວກັບກົດໝາຍໃນເລື່ອງນັ້ນເຮັດໃຫ້ມີແງ່ມູມເຖິງປະເດັນຂ່າວໃໝ່ທີ່ຂະຫຍາຍອອກໄປໄດ້.

**8.3. ຂັ້ນຕອນການວາງແຜນ: ພາກທິດສະດີທີ່ຖືກຕ້ອງສານຕໍ່ເປັນຮູບປະທຳ**

ເມື່ອຜ່ານຂັ້ນຕອນການຮວບຮວມຂໍ້ມູນແລ້ວກໍມາເຖິງຂັ້ນຕອນການນຳສະເໜີ ຫຼື ການລາຍງານຂ່າວອອກໄປໃຫ້ຜູ້ອ່ານໄດ້ຮັບຮູ້ ເຊິ່ງເປັນຂັ້ນຕອນທີ່ມີຄວາມສຳຄັນ. ນອກຈາກນີ້ ມີຜົນກະທົບຕໍ່ຜູ້ກ່ຽວຂ້ອງກັບເລື່ອງນັ້ນ ອາດກະທົບເຖິງສະຖານະພາບຂອງໜັງສືພິມ ເພາະຂ່າວສືບສວນມັກຈະຖືກຟ້ອງຮ້ອງດຳເນີນຄະດີໃນຂໍ້ຫາໝິ່ນປະໝາດ. ຫາກຫຼັກຖານບໍ່ໜັກແໜ້ນ, ການລາຍງານຂ່າວບໍ່ຊັດເຈນ. ຂ່າວລັກສະນະນີ້ຈະເປັນຂ່າວທີ່ມີຄວາມໜ້າສົນໃຈ, ເປັນຂ່າວສຳຄັນ, ຫາກສະເໜີໄປແລ້ວເກີດຜົນກະທົບກວ້າງຂວາງ, ການນຳສະເໜີຂ່າວຈະໄດ້ຮັບການຕັດສິນໃຈເຖິງລະດັບບັນນາທິການ, ບາງຄັ້ງຮວມເຖິງເຈົ້າຂອງໜັງສືພິມ ເຊິ່ງມັກຈະນຳສະເໜີໃນໜ້າໜຶ່ງຕິດຕໍ່ກັນ.

ຂັ້ນຕອນການນຳສະເໜີ ຫຼື ການລາຍງານຂ່າວອອກໄປສູ່ການຮັບຮູ້ຂອງສາທາລະນະຊົນບໍ່ມີກົດເກນຕາຍຕົວວ່າຈະຕ້ອງໄດ້ຂໍ້ມູນຫຼັກຖານທັງໝົດຄົບຖ້ວນສົມບູນເສຍກ່ອນຈຶ່ງນຳສະເໜີໄດ້. ຫາກຂໍ້ມູນທີ່ໄດ້ມາມີນ້ຳໜັກຂອງຄວາມເປັນໄປໄດ້, ເປັນເລື່ອງທີ່ເກີດຂຶ້ນຈິງ, ຄົບອົງປະກອບຂອງຂ່າວທັງມີແນວໂນ້ມ ຈະຕິດຕາມສືບເຊາະຂໍ້ເປັນຈິງຕໍ່ໄປໄດ້, ການລາຍງານຂ່າວເບື້ອງຕົ້ນໃຫ້ຜູ້ອ່ານຮູ້ວ່າເລື່ອງລາວເປັນມາແນວໃດ, ແງ່ມູມທີ່ເປັນເງື່ອນໄຂໜ້າສົງໄສຢູ່ບ່ອນໃດສາມາດລາຍງານຂ່າວໄດ້ເລີຍ. ຂ່າວລັກສະນະສືບສວນເກືອບທຸກຂ່າວ, ການໄດ້ຂໍ້ມູນຫຼັກຖານ, ເອກະສານຕ່າງໆແມ່ນແຕ່ການສຳພາດບຸກຄົນຈະຄ່ອຍໆເພີ່ມຂຶ້ນເລື້ອຍໆ. ເມື່ອການສະເໜີຂ່າວກະທົບໄປເຖິງຜູ້ໃດ, ທັງຜູ້ໄດ້ປະໂຫຍດຈົນເຖິງຄົນທີ່ບໍ່ມີສ່ວນໄດ້ສ່ວນເສຍ ແຕ່ເນື່ອງຈາກເຂົາຮູ້ເລື່ອງລາວທັງໝົດ ແລະ ມີ ຫຼັກຖານຢູ່ໃນມືຕ້ອງການເຫັນຄວາມຖືກຕ້ອງຈຶ່ງຕັດສິນໃຈໃຫ້ຂໍ້ມູນແກ່ໜັງສືພິມ.

ຂັ້ນຕອນການນຳສະເໜີ ຫຼື ການລາຍງານນີ້, ການລຳດັບປະເດັນໃຫຍ່ເຄື່ອນໄຫວກັນໄປໃນແຕ່ລະວັນທີ່ຈະນຳສະເໜີອອກໄປມີຜົນກົດດັນຜູ້ຮັບຜິດຊອບຢ່າງສຳຄັນ. ຈາກການທີ່ຂ່າວລັກສະນະສືບສວນມີປະເດັນສະຫຼັບຊັບຊ້ອນຫຼວງຫຼາຍ, ການເອົາປະເດັນຂຶ້ນມາຕິດຕາມ ແລະ ນຳສະເໜີຈຶ່ງຕ້ອງຄັດເລືອກ, ກັ່ນຕອງປະເດັນໃດຈະສະເໜີກ່ອນ ສະເໜີລະຫວ່າງທີ່ຂ່າວກຳລັງດຳເນີນໄປ ຫຼື ເກັບເອົາໄວ້ສະເໜີໃນຕອນທ້າຍໃກ້ຈະຈົບການນຳສະເໜີ. ນອກຈາກໃນຮູບແບບຂອງຂ່າວຕາມຕິດຕໍ່ເນື່ອງແລ້ວ ການນຳສະເໜີດ້ວຍຮູບແບບອື່ນມີສ່ວນຊ່ວຍຊຸກຍູ້ໃຫ້ຂ່າວບັນລຸເປົ້າໝາຍຫຼາຍຂຶ້ນເຊັ່ນ: ບົດລາຍງານ, ສຳພາດພິເສດ, ບົດວິເຄາະ, ບົດບັນນາທິການ. ປັດຈຸບັນ ຂ່າວມີຫຼາຍ, ສະຫຼັບຊັບຊ້ອນ, ປະເດັນຫຼາກຫຼາຍ. ການສະເໜີດ້ວຍຮູບແບບຂອງຂ່າວພຽງຢ່າງດຽວບໍ່ພຽງພໍເຮັດໃຫ້ປະສິບຜົນຊ້ຳ. ການສະໜັບສະໜູນດ້ວຍການນຳສະເໜີໃນຮູບອື່ນມີຜົນຕໍ່ຄວາມສຳເລັດຂອງຂ່າວເປັນຢ່າງຍິ່ງ.

**8.4. ຂັ້ນຕອນວິທີການດຳເນີນການເຮັດຂ່າວລັກສະນະສືບສວນອາດເຮັດໄດ້ໂດຍພິຈາລະນາຈາກຫຼັກ 11 ຂໍ້ຄື:**

- ຕ້ອງມີຄວາມຄິດ (Conception)
- ສຶກສາເລື່ອງລາວທີ່ຈະເຮັດໄດ້ (Feasibility Study)
- ການຕັດສິນໃຈເຮັດ ຫຼື ບໍ່ (Go and No Go study Decision)
- ການວາງແຜນ ແລະສ້າງພື້ນຖານໃນການເຮັດວຽກ (Planning and Base Buibding)
- ການວິໄຈພື້ນຖານ (Original Research)
- ການປະເມີນຜົນໃໝ່ອີກຄັ້ງ (Re - Evaluation)
- ທົບທວນການຕັດສິນໃຈເຮັດ ຫຼື ບໍ່ເຮັດອີກຄັ້ງ (Go and No go Decision)
- ສຳພາດບຸກຄົນທີ່ເປັນກະແຈໄຂຂ່າວ (Key interviews)
- ການປະເມີນຜົນຄັ້ງສຸດທ້າຍ (Final Evaluation)
- ທົບທວນການຕັດສິນໃຈເຮັດ ຫຼື ບໍ່ເຮັດອີກຄັ້ງສຸດທ້າຍ (Final go and no go Decision)
- ຂຽນ ແລະຕີພິມຂ່າວ (Writint and publicatone)

**❋ ຈາກການສຶກສາເຖິງແຜນຜັງໃນການເຮັດຂ່າວຈະພົບວ່າ ຈຸດເລີ່ມຕົ້ນຢູ່ທີ່ Conception ເປັນເລື່ອງສຳຄັນ ແລະ ມີທີ່ມາຈາກຫຼາຍໆທາງດ້ວຍກັນ. Conception (ແນວຄິດ) ມາຈາກບ່ອນໃດແດ່.**

+ ຂໍ້ແນະນຳ ຫຼື ແຫຼ່ງຂອງຂ່າວ (Tips).
+ ແຫຼ່ງຂ່າວ (Sources)
+ ການອ່ານ (Reading)
+ ເຫດການທີ່ເປັນຂ່າວ (News Breaks)
+ ການຊອກຫາຂ່າວ (Legwork)
+ ແງ່ມຸມຂ່າວທີ່ເກີດຂຶ້ນໃໝ່ (Tangential Angles)
+ ການສັງເກດ ແລະຂໍ້ມູນ (Observations and Files)

**8.4.1 ອະທິບາຍຂັ້ນຕອນວິທີການເຮັດຂ່າວແບບສືບສວນ.**

ເພື່ອເປັນການທຳຄວາມເຂົ້າເຖິງຂັ້ນຕອນໃນການເຮັດຂ່າວລັກສະນະສືບສວນໃຫ້ເລີ່ມພິຈາລະນາວ່າ ມີຄວາມຄິດທີ່ຈະເຮັດຂ່າວ ແລະການກວດສອບຕ້ອງຜ່ານຂັ້ນຕອນໃນການດຳເນີນການໃຫ້ໄດ້ຂ່າວຕາມທີ່ຄິດໄວ້ນັ້ນ, ແນວທາງປະຕິບັດຄື: Conception ຫຼື ຄວາມຄິດມາຈາກບ່ອນໃດແດ່, ເຮົາອາດເລີ່ມຈາກຂໍ້ໃດຂໍ້ໜຶ່ງໃນຂໍ້ 1 - 7 ຫຼື ຫຼາຍຂໍ້ກໍໄດ້ເຊັ່ນ: ເລີ່ມຈາກຂໍ້ 1 ຄື Tips ໄດ້ຂໍ້

ມູນຈາກຜູ້ແນະນຳ ຫຼື ໄດ້ແຫຼ່ງຂອງຂ່າວ (Tipster) ພະຍາຍາມຈັບຈຸດວ່າຂ່າວນັ້ນເປັນເລື່ອງລາວອັນໃດກັນແທ້.

ຕົວຢ່າງ: ອະທິບໍດີກົມສາມັນສຶກສາກະຊວງສຶກສາທິການໃຫ້ການສຳພາດພິເສດວ່າ ຢາມ້າລະບາດໃນໂຮງຮຽນມັດທະຍົມສຶກສາ ສັງກັດກົມສາມັນຈົນໜ້າເປັນຫ່ວງຢ່າງຍິ່ງ. ມີໂຮງຮຽນດັ່ງແຫ່ງໜຶ່ງ ນັກຮຽນຕິດຢາບ້າເກືອບເຄິ່ງໂຮງຮຽນ. ເມື່ອອາທິດຜ່ານມາ ມີນັກຮຽນຄົນໜຶ່ງຖືກເຈົ້າໜ້າທີ່ຕຳຫລວດຈັບກຸມຕົວໄປດຳເນີນຄະດີ, ຂໍ້ຫາຈຳໜ່າຍ ແລະເສບຢາບ້າຂະນະນີ້ຍັງບໍ່ມີໃຜມາປະກັນຕົວ, ຢາກໃຫ້ສິ້ມວນຊົນຊ່ວຍກັນປຸກລະດົມເພື່ອເຢົາວະຊົນຂອງເຮົາຈະໄດ້ບໍ່ຕົກເປັນທາດຂອງຢາເສບຕິດ.

ແຜນພູມສາດສະແດງຂັ້ນຕອນວາງແຜນການລາຍງານຂ່າວລັກສະນະສືບສວນ.

# ແຜນວາດສະແດງຂັ້ນຕອນວາງແຜນການລາຍງານຂ່າວລັກສະນະສືບສວນ



ໜັງສືພິມຈະນຳສຳພາດຂ່າວຈາກອະທິການບໍດີກົມສາມັນສຶກສາໄປຫາຄຳຕອບໃຫ້ສັງຄົມຮູ້ວ່າ ມີເດັກນັກຮຽນຕິດຢາບ້າເກືອບເຄິ່ງໂຮງຮຽນ ແລະຖືກເຈົ້າໜ້າທີ່ຕຳຫຼວດຈັບກຸມໄປດຳເນີນຄະດີແທ້. ຈາກປະເດັນຂ່າວເຊິ່ງເກີດຈາກການຊີ້ນຳ ຫຼື ການຊີ້ເຫດການຂອງຂ່າວ (Tip) ທີ່ໄດ້ມານີ້ເຮັດໃຫ້ເກີດແງ່ມຸມຕ່າງໆ ແຕກຕ່າງກັນໄປຈົນນຳໄປສູ່ການຕັ້ງຂໍ້ສັງເກດ ຫຼື ສົມມຸດຖານ (Hypothesis) ຂໍ້ຄວາມເປັນໄປໄດ້ ແລະຄວາມເປັນໄປບໍ່ໄດ້ໃນເວລາຕໍ່ມາ. ຈາກນັ້ນ ຈຶ່ງເປັນການຈັດລຳດັບຄວາມໜ້າເປັນໄປໄດ້ຂອງເລື່ອງນັ້ນໆ.

ຂັ້ນຕອນນີ້ມີຂໍ້ທີ່ຄວນລະວັງກ່ຽວກັບ Tipster (ຜູ້ໃຫ້ສຳພາດຂອງຂ່າວ) ຄື:

1. ຈຳເປັນທີ່ຈະຕ້ອງປະເມີນຄຸນຄ່າ Tipster ວ່າຈະໄວ້ໃຈໄດ້ສ່ຳໃດ, ສິ່ງທີ່ໄດ້ຮັບຈາກ Tipster ເປັນຂໍ້ຄວາມຈິງທີ່ເຊື່ອໄດ້ ຫຼື ບໍ່, ມີຂໍ້ພິສູດຫຍັງເພື່ອສະໜັບສະໜູນຂໍ້ອ້າງ ຫຼື ຂໍ້ຄວາມຈິງ. ທາງອອກອັນໜຶ່ງຄືຕ້ອງໄປກວດສອບທີ່ຕົ້ນຕໍຂອງແຫຼ່ງຂ່າວເລຍກ່ອນວ່າ Tip ທີ່ໄດ້ຮັບມີເຫດຜົນພຽງ ໃດ.

2. ຕັ້ງສົມມຸດຖານເບິ່ງວ່າເຈດຕະນາຂອງ Tipster ມີຈຸດມຸ້ງໝາຍຫຍັງ ຫາກຂ່າວທີ່ໄດ້ຮັບມີການຕີພິມແຜ່ຫຼາຍ. ນອກຈາກ Tipster ແລ້ວ, ໃຜໄດ້ຮັບປະໂຫຍດສ່ວນຕົວອີກ ຫຼື ເພື່ອຈະເອົາໃສໜັງສືພິມເປັນເຄື່ອງມືໃນການທຳລາຍບຸກຄົນອື່ນ ຫຼື ຫວັງຜົນປະໂຫຍດປະການໃດຫຼັກສຳຄັນໃນການຕັດສິນໃຈຄື ປະໂຫຍດຂອງສາທາລະນະຊົນ.

3. ໃຫ້ມີການປະເມີນຄຸນຄ່າຂອງ Tip ເປັນຄັ້ງສຸດທ້າຍສິ່ງທີ່ຄວນພິຈາລະນາຄື: ຄວາມເປັນໄປໄດ້ໃນການພິສູດຂໍ້ກ່າວຫານັ້ນເທົ່ານັ້ນ,ບໍ່ຄວນຈະນຳບຸກຄະນິກ ຫຼື ຄວາມມຸ້ງໝາຍຂອງ Tipster ເຂົ້າມາພິຈາລະນາເຖິງວ່າ Tip ຈະບໍ່ຜ່ານການຕຶກຕອງຄວນນຳເລື່ອງນັ້ນເກັບໄວ້ໃນແຟ້ມກ່ອນແທນທີ່ຈະຖິ້ມໄປ ເພາະໃນອະນາຄົດອາດມີຂ່າວສານເພີ່ມເຕີມເພື່ອມາເສີມໃຫ້ Tip ນັ້ນໄດ້ມີຄຸນຄ່າທາງຂ່າວຂຶ້ນມາກໍໄດ້. ດັ່ງນັ້ນ, ຫຼັກຄວາມຄິດ ຫຼື Concepiron ຖືໄດ້ວ່າເປັນການເລີ່ມຕົ້ນທີ່ສອບສວນໃຫ້ດີກ່ອນທີ່ຈະເຂົ້າໄປສູ່ຂັ້ນຕອນຕໍ່ໄປ.

✠ ຂັ້ນຕອນຕໍ່ມາສຶກສາເລື່ອງລາວຕ່າງໆ ທີ່ໜ້າຈະເປັນໄປໄດ້ ຫຼື ເປັນໄປບໍ່ໄດ້ກ່ຽວກັບຂ່າວກ່ອນຈະຕັດສິນໃຈວ່າຈະເຮັດຂ່າວ ຫຼືບໍ່ (ຫຼັກຂໍ້ 2 - 3) ພຽງໃດ ເພື່ອການສອບສວນເລື່ອງລາວນັ້ນໆ. ຖ້າເປັນໄປໄດ້ໃນວິນາທີນັ້ນ ຕັດສິນໃຈວາງແຜນການທັນທີ, ວະເຄາະ ແລະວິໄຈພື້ນຖານຂອງຂ່າວເພື່ອເປັນແນວທາງໃນການເຮັດຂ່າວ ແລະຈະເຮັດໃຫ້ເກີດຄວາມໝັ້ນໃຈຍິ່ງຂຶ້ນ. ທົບທວນປະເມີນຜົນອີກຄັ້ງໜຶ່ງກ່ອນທີ່ຈະຕັດສິນໃຈດຳເນີນການເຮັດຫຍັງຕໍ່ໄປ ຫຼື ພຽງຕຽມການແຕ່ຖ້າເວລາທີ່ຈະເຮັດ (ຫຼັກຂໍ້ 4,5,6,7).

ການເຮັດຂ່າວແບບນີ້ ຫຼີກເວັ້ນບໍ່ໄດ້ທີ່ຈະທຳການສຳພາດບຸກຄົນທີ່ກ່ຽວຂ້ອງໂດຍຕົງ ຫຼື ທາງອ້ອມ. ບໍ່ວ່າບຸກຄົນເຫຼົ່ານັ້ນຈະສຳຄັນ ຫຼືບໍ່ ແຕ່ຕ້ອງກ່ຽວຂ້ອງກັບຂໍ້ຄວາມຈິງທີ່ເຮົາໄດ້ຮັບເພາະເປັນ "ກະແຈໄຂຂ່າວ" ທີ່ສຳຄັນເພື່ອຈະໄດ້ຂໍ້ຄວາມຈິງທີ່ແອບແຝງລາຍງານເປັນຂ່າວອອກມານັ້ນ

ເຮົາຖືວ່າບຸກຄົນເປັນປັດໄຈທີ່ສຳຄັນເທົ່າກັບເອກະສານປັດໄຈທັງ 2 ຢ່າງ. ຫາກເບິ່ງໃນແງ່ກົດ ໝາຍເຮົາຖືວ່າເປັນພະຍານບຸກຄົນ ແລະພະຍານເອກະສານເພື່ອເປັນຫຼັກຖານໃນການຕໍ່ສູ້ທາງສານທີ່ໜັງສືພິມອາດຈະຖືກຟ້ອງຮ້ອງຖານໝິ່ນປະໝາດ ຫຼື ລະເມີດສິດທິສ່ວນບຸກຄົນ ແລະໜັງສືພິມຕ້ອງເຊື່ອວ່າສິ່ງທີ່ຢູ່ໃນມືຕ້ອງພິສູດໄດ້. ເພາະໃນບາງຄັ້ງຫາກຈຳເປັນອາດນຳໄປພິສູດຄວາມຈິງຕໍ່ສາທາລະນະຊົນເທົ່າທີ່ຈະເຮັດໄດ້ ຫຼື ໃນສານ. ນອກຈາກນັ້ນ, ພະຍານບອກເຫຼົ່າເຖິງນ້ຳໜັກຈະບໍ່ຫຼາຍ ເຊິ່ງກົດໝາຍຖືວ່າເປັນພະຍານແວດລ້ອມກໍຕາມ, ບາງຄັ້ງອາດຈຳເປັນບໍ່ຄວນຈະເບິ່ງຂ້າມໄປ (ຫຼັກຂໍ້ 8).

ຫຼັງຈາກເກັບຂໍ້ເທັດຈິງໄດ້ພໍສົມຄວນ. ບັນຫາຕໍ່ໄປຄືວ່າ ເຮົາພ້ອມທີ່ຈະຕີພິມຂ່າວນັ້ນແລ້ວຫຼືຍັງ, ເຮົາໝັ້ນໃຈພຽງໃດໃນການພິມຂ່າວນັ້ນ ຫຼື ສະເໜີສາເຫດຂອງຂ່າວເປັນທາງນອງຢັ່ງເບິ່ງກ່ອນ ເພື່ອເບິ່ງປະຕິກິລິຍາຕອບໂຕ້ຈາກບຸກຄົນທີ່ມີສ່ວນກ່ຽວຂ້ອງກັບຂ່າວນັ້ນ. ຢ່າງໃດກໍຕາມການສະເໜີຂ່າວແບບນີ້ນັ້ນເປັນການສ່ຽງຢ່າງຍິ່ງຕໍ່ທຸກໆຝ່າຍ, ບໍ່ວ່າຈະເປັນຜູ້ສື່ຂ່າວໜັງສືພິມ, ແຫຼ່ງຂ່າວບຸກຄົນທີ່ກ່ຽວຂ້ອງກັບຂ່າວ. ຊື່ສຽງຂອງປະເທດ (ໂດຍສະເພາະບັນຫາຂອງຊື່ສຽງປະເພດນັ້ນຍັງເປັນທີ່ຖົກຖຽງກັນຢູ່ວ່າເປັນບັນຫາຂອງບຸກຄົນ ຫຼື ປະເທດກັນແທ້ເຊັ່ນ: ຄະດີຮັບສິນບົນເຮືອດຳນ້ຳ) ເພື່ອປ້ອງກັນຄວາມຜິດພາດ. ຜູ້ຮັບຜິດຊອບ ຫຼື ກອງບັນນາທິການຈຳເປັນຕ້ອງໃຊ້ຫຼັກປະເມີນຜົນເປັນຄັ້ງສຸດທ້າຍ (ຫລັກຂໍ້ 9) ຫາກມີຂໍ້ມູນພຽງພໍ, ໝັ້ນໃຈຜົນການປະເມີນຈຶ່ງເຮັດການທົບທວນການຕັດສິນໃຈເປັນຄັ້ງສຸດທ້າຍວ່າ ຈະເຮັດ ຫຼື ບໍ່ເຮັດ (ຫຼັກຂໍ້ 10) ຫາກຕັດສິນໃຈຈະເຮັດຂ່າວນີ້ຢ່າງເດັດຂາດ. ມາຮອດຫຼັກຂໍ້ 11 ຄື: ການຂຽນ ແລະ ຕີພິມຂ່າວທັນທີ, ເຮົາຈະເຫັນວ່າການເຮັດຂ່າວລັກສະນະສືບສວນດັ່ງກ່າວນັ້ນເຮັດດ້ວຍຄວາມຫຍຸ້ງຍາກຫຼາຍ, ຕ້ອງມີຄວາມລະມັດລະວັງເປັນພິເສດ. ການກຳນົດຂັ້ນຕອນໄວ້ຫຼາຍໝາຍເຖິງ 11 ຂັ້ນເພື່ອໃຫ້ໃຊ້ກັບການເສາະສະແຫວງຫາຄວາມເປັນຈິງຈາກເລື່ອງລາວຕ່າງໆທີ່ມີຄວາມສະຫລັບຊັບຊ້ອນ. ຖ້າພວກເຮົາບໍ່ມີຫຼັກຖານຫຍັງເລີຍ, ໂອກາດທີ່ຈະພິດພາດມີຫຼາຍ, ຫາກມີຂໍ້ມູນດີພ້ອມຫຼັກເກນໃນການເຮັດຂ່າວຖືກຕ້ອງ, ຫຼັກຄວາມຄິດດີຈະເຮັດໃຫ້ການຕັດສິນໃຈທີ່ຈະເຮັດຫຍັງດີໄປນຳ.

**❀ ຂໍ້ເຕືອນໃຈ: ຢ່າໃຫ້ຂ່າວຂຸດເລິກຫຼາຍໄປຈົນຖືກເບິ່ງວ່າຕົວເຮົາຄືຄົນເລິກລັບ.**

ບັນຫາສຳຄັນສຳລັບການເຮັດຂ່າວແບບນີ້ຢູ່ທີ່ການຕັດສິນໃຈຂອງບັນນາທິການ ຫຼື ຜູ້ສື່ຂ່າວໃນແຕ່ລະມື້ວ່າຈະເຮັດເລື່ອງຫຍັງ, ມີຄວາມສຳຄັນແນວໃດ, ປະເດັນຂອງເລື່ອງລາວຢູ່ບ່ອນໃດແລະຈະເລີ່ມອັນໃດກ່ອນອັນໃດຫຼັງ. ເພາະແຕ່ລະປະເດັນບັນຫານັ້ນອາດກ່ຽວຂ້ອງກັບບັນຫາຫຼາຍດ້ານເຊັ່ນ: ກົດໝາຍ, ສິນລະທຳ ແລະຈັນຍາບັນໃນການສະເໜີຂ່າວ, ຜູ້ສື່ຂ່າວປະເພດນີ້ຕ້ອງ ຮູ້ຂໍ້ມູນໃຫ້ຫຼາຍກ່ຽວກັບເລື່ອງສ່ວນຕົວຂອງແຕ່ລະຄົນ ເພາະບຸກຄົນເຫຼົ່ານັ້ນອາດມີຜົນປະໂຫຍດຂັດກັນ. ໜັງສືພິມອາດຖືກໃຊ້ເປັນເຄື່ອງມືໃນການປະຫັດປະຫານໄດ້, ຄວນວາງຕົວຢູ່ບົນພື້ນຖານຂອງຄວາມຖືກຕ້ອງ, ໄຈ້ແຍກເລື່ອງຕ່າງໆໃຫ້ມີຄວາມສົມດູນ, ຂຸດເລິກເຖິງເບື້ອງໜ້າເບື້ອງຫຼັງວ່າ

ອັນໃດກັນແທ້ທີ່ແອບແຝງເບື້ອງຫຼັງຂອງຂ່າວນີ້, ເປັນເລື່ອງສ່ວນຕົວເກີນໄປ ຫຼື ເປັນເລື່ອງທີ່ປະຊາຊົນຄວນຮັບຮູ້.

ໄລຍະເວລາໃນການຢຸດຕິບໍ່ສະເໜີຂ່າວກໍຖືເປັນເລື່ອງສຳຄັນ, ໃຫ້ລະມັດລະວັງສະເໜີຂ່າວສືບສວນຂອງໜັງສືພິມ, ບາງຄັ້ງອາດຂາດການຕິດຕາມຂ່າວ (Follow-up) ກໍໃຫ້ເກີດຄວາມສະສົງໃສໃນເລື່ອງຂ່າວໃຫ້ແກ່ຜູ້ອ່ານໄດ້. ເພາະໜັງສືພິມຕ້ອງເຄົາລົບຄວາມຈິງຢ່າງກ້າຫານ, ສະຫງ່າຜ່າເຜີຍ, ລາຍງານຂ່າວຢ່າງກົງໄປ ແລະກົງມາ, ບໍ່ເຮັດຫຍັງເລິກລັບແຕ່ຕ້ອງສະແຫວງຫາຄວາມເລິກລັບທີ່ ແອບແຝງຄວາມຈິງບາງປະການມາເປີດເຜີຍໃຫ້ໄດ້. ເວັ້ນໄວ້ແຕ່ບາງກໍລະນີ ເລື່ອງລາວຕ່າງໆຍັງບໍ່ ສາມາດທີ່ຈະຂຸດຄົ້ນຫາຫຼັກຖານມາເປີດໄປງໄດ້ສົມບູນ. ວິທີການທີ່ດີຄື: ການມີຄວາມອົດທົນ, ຈິນຕະນາການຕະຫຼອດຈົນມີໄຫວພິກ ແລະສະຕິປັນຍາພຽງພໍ, ຮັກສາລະດັບການສະແຫວງ ຫາຄວາມຈິງສະໝໍ່າສະເໝີເພື່ອສ້າງມາດຖານໃຫ້ແກ່ໜັງສືພິມ. ໄລຍະເວລາຂອງການເຮັດຂ່າວແບບສືບ ສວນ, ເຮົາບໍ່ສາມາດຈະກຳນົດຕາຍຕົວໄດ້ວ່າ ຈຸດ dimax ຂອງເລື່ອງຢູ່ບ່ອນໃດ. ຄວາມຈິງທີ່ຖືກເປີດເຜີຍອາດເປັນມື້, ອາທິດ, ເດືອນ ຫຼື ປີ ສຸດແລ້ວແຕ່ວ່າ ປະເດັນຂອງບັນຫາຈະຖືກຊ້ອນໄວ້ ຢ່າງແນບນຽນພຽງໃດໃຫ້ຍຶດຖືຫຼັກວ່າ ອັນໃດກໍຕາມຍິ່ງເກັບໄວ້ເປັນຄວາມລັບ, ເລື່ອງນັ້ນຍິ່ງມີຄວາມສຳຄັນ ແລະປະຊາຊົນໃຫ້ຄວາມສົນໃຈ ແລະຢາກຮູ້ວ່າເບື້ອງຫຼັງຂອງເລື່ອງລາວນັ້ນໆຄື ຫຍັງ ກັນແທ້.

### 9. ແຫຼ່ງຂ່າວ.

#### 9.1. ປັດໃຈກຳນົດຄວາມສຳເລັດ ຫຼື ຄວາມລົ້ມເຫຼວ.

ໃນການລາຍງານຂ່າວສືບສວນ, ເລື່ອງຂອງແຫຼ່ງຂ່າວເປັນສິ່ງສຳຄັນ ເພາະແຫຼ່ງທີ່ມາຂອງຂ່າວປະເພດນີ້ຕ້ອງມີຄວາມໜ້າເຊື່ອຖືສູງ, ມີຄວາມໄວ້ວາງໃຈກັນ, ຫາກເກີດຄວາມບົກພ່ອງຂ່າວທີ່ລາຍງານອອກໄປ; ບໍ່ກົງກັບຄວາມຈິງຈະເຮັດໃຫ້ເກີດຄວາມເສຍຫາຍຕໍ່ຜູ້ທີ່ຕົກເປັນຂ່າວ, ກະທົບເຖິງແນວຄິດຄວາມໜ້າເຊື່ອຖືຂອງໜັງສືພິມ. ຫາກກ້າວກ່າຍ, ໝິ່ນປະໝາດກາຍເປັນກໍລະນີຮ້ອງຟ້ອງບັນນາທິການ, ຜູ້ພິມ, ຜູ້ໂຄສະນາຈະຖືກດຳເນີນຄະດີ. ການກວດສອບຄວາມຖືກຕ້ອງຂອງຂ່າວທີ່ໄດ້ມາຈາກແຫຼ່ງຂ່າວແຕ່ລະແຫຼ່ງຕ້ອງທຳການກວດສອບ 2 ຫາ 3 ຄັ້ງ. ກວດສອບຈາກຝ່າຍທີ່ກ່ຽວຂ້ອງ, ຝ່າຍກົງກັນຂ້າມໃນທຸກໆປະເດັນເພື່ອປ້ອງກັນຄວາມຜິດພາດ ຫຼື ຄວາມເປັນເຍື້ອຝ່າຍໃດຝ່າຍໜຶ່ງ.

#### 9.2. ຫຼັກຖານເອກະສານທີ່ໃຊ້ໃນການປະກອບນຳສະເໜີຂ່າວ.

ເຊິ່ງປະກອບມີຫຼາຍປະເພດເຊັ່ນ: ຈະເປັນການລາຍງານການສະແດງຊັບສິນສ່ວນບຸກຄົນ, ລາຍງານທາງແນວຄິດດ້ານການເງິນ, ລາຍງານປະຈຳປີ, ຜົນສະຫຼຸບການດຳເນີນງານ, ຜົນການປະກອບການທີ່ແຈ້ງຕໍ່ຕະຫຼາດຫຼັກຊັບທີ່ບັນທຶກປະຈຳວັນຂອງເຈົ້າໜ້າທີ່ສຳຫຼວດລາຍງານຜົນການ

ຕັດສິນຄະດີຂອງສານ. ບັນທຶກເອກະສານປະຕິວັດ, ບຸກຄົນ, ເອກະສານຫຼັກຖານການຈັດລະບຽບທາງການຄ້າ, ການດຳເນີນທຸລະກິດ, ລາຍງານການເສຍພາສີ. ບັນທຶກທາງການແພດ, ລາຍງານຜົນກະທົບທາງສິ່ງແວດລ້ອມ, ລາຍງານທາງການວິໄຈຂອງສະຖາບັນການສຶກສາຕ່າງໆ.

ແຫຼ່ງຂ່າວປະເພດເອກະສານນີ້ ຜູ້ສື່ຂ່າວເຊິ່ງສືບສວນຕ້ອງພະຍາຍາມເກັບຮວບຮວມໄວ້ ແລະຈັດລະບົບໄວ້ໃຫ້ເປັນລະບຽບເພື່ອຄວາມສະດວກໃນການໃຊ້ງານ. ພ້ອມທີ່ຈະຫຍິບຂຶ້ນມານຳສະເໜີເພື່ອຢືນຢັນຄວາມເປັນຈິງ ແລະຄວາມໜ້າເຊື່ອຖືຂອງຂ່າວທີ່ໄດ້ພິມອອກໄປຈົນເຮັດໃຫ້ຜູ້ກ່ຽວຂ້ອງຍອມຮັບ ແລະຍອມຕໍ່ຫຼັກຖານພະຍານເອກະສານທີ່ຜູ້ສື່ຂ່າວໄດ້ມາ ແລະຕີພິມລົງໃນໜັງສືພິມ.

### 9.3. ຄວາມສຳເລັດຂອງການລາຍງານຂ່າວສືບສວນ.

ແຫຼ່ງຂ່າວທີ່ເປັນບຸກຄົນ ແລະເອກະສານມີສ່ວນກ່ຽວຂ້ອງໂດຍກົງຫາກທີມຜູ້ສື່ຂ່າວສືບສວນສາມາດເຂົ້າເຖິງແຫຼ່ງຂ່າວທີ່ເປັນຫົວໃຈເລື່ອງນັ້ນໄດ້ໄວເທົ່າໃດ ຍ່ອມບັນລຸເປົ້າໝາຍຂອງຂ່າວ. ການເຮັດຂ່າວຄວາມກະຈ່າງແຈ້ງຍິ່ງປາກົດແກ່ສັງຄົມເພື່ອເປັນການຮັກສາໃຫ້ຄວາມຖືກ ຕ້ອງ, ຍຸຕິທຳຄົງຕົວຢູ່ຕະຫຼອດໄປ. ການລາຍງານຂ່າວສືບສວນຈຶ່ງເປັນທີ່ຕ້ອງການໃນສັງຄົມ.

## 10. ຂ່າວສືບສວນ.

### 10.1. ຂໍ້ຄວນລະວັງຮອບຄອບ ແລະຄວາມຮູ້ສຶກ.

ການລາຍງານຂ່າວສືບສວນຈະເກີດຂຶ້ນຮຸນແຮງ ແລະກວ້າງຂວາງຈະກະທົບເຖິງບຸກຄົນຈຳນວນຫຼາຍຢູ່ໃນຄວາມສົນໃຈຕິດຕາມຂອງປະຊາຊົນຫຼາຍກວ່າຂ່າວເຫດການທີ່ເກີດຂຶ້ນແລ້ວກໍຈົບໄປ.

- ການລາຍງານຂ່າວດ້ວຍຄວາມຮອບຄອບລະມັດລະວັງ, ການຕິດຕາມຫາຄວາມຈິງຂອງຜູ້ສື່ຂ່າວຕ້ອງໃຊ້ກະຕິກາ, ໄຫວພິບ, ຈິດໃຈທີ່ທ່ຽງທຳ, ສະແຫວງຫາຄວາມຈິງຂອງເລື່ອງເປັນຫຼັກ, ບໍ່ໄດ້ໃສ່ຮ້າຍປ້າຍສີຜູ້ອື່ນ, ບາງຄັ້ງຕ້ອງໄດ້ຜ່ານຜ່າອຸປະສັກທີ່ມາເຖິງຕົວ ແລະໜັງສືພິມທີ່ສັງເກດສິ່ງທີ່ຜູ້ສື່ ຂ່າວ ແລະໜັງສືພິມຕ້ອງລະວັງໃນການທຳໜ້າທີ່ນີ້ຈຶ່ງມີຫຼາຍປະການ.

- ຂະນະທີ່ຂ່າວສືບສວນເປັນຂ່າວທີ່ພັກດັນໃຫ້ເກີດຄວາມປ່ຽນແປງ, ເກີດຜົນປະໂຫຍດຕໍ່ສັງຄົມສ່ວນລວມ, ຕໍ່ບຸກຄົນຜູ້ກ່ຽວຂ້ອງ. ແຕ່ຂະນະດຽວກັນຫາກເກີດຄວາມຜິດພາດອາດຈະນຳຜົນຮ້າຍ, ຄວາມເສຍຫາຍຕໍ່ສ່ວນລວມ, ເກີດຄວາມສັບສົນວຸ້ນວາຍ. ຜູ້ສື່ຂ່າວຫາກບໍ່ມີຈາລິຍະທຳແຫ່ງວິຊາຊີບຄວບຄຸມຢູ່ຕະຫລອດເວລາ.

-ການເຮັດຂ່າວສືບສວນນອກຈາກຄວາມຖືກຕ້ອງ(Accuracy),ຄວາມເປັນທຳ(Fairness) ແລະຄວາມສົມດູນ (Balance), ຜູ້ສື່ຂ່າວສືບສວນຈະມີສົມມຸດຖານຂອງຕົນທີ່ຈະຕ້ອງຊອກຫາຂໍ້ມູນຫຼັກຖານມາສະໜັບສະໜູນ ຫຼື ພິສູດເງື່ອນງຳຕ່າງໆ, ບໍ່ຄວນສະຫຼຸບບັນຫາງ່າຍໆ, ຖືເອົາ

ຄວາມຄິດເຫັນຂອງຕົນເອງເປັນຫຼັກ. ປ້ອນຂໍ້ມູນຂ່າວສານດ້ານດຽວໃຫ້ຜູ້ອ່ານເຊື່ອຕາມສົມມຸດຖານທີ່ຕົນເອງຕັ້ງໄວ້ໃນຕອນຕົ້ນເປັນສຳຄັນ. ກົງກັນຂ້າມຕ້ອງເປີດເຜີຍຂໍ້ມູນຂ່າວສານໃນດ້ານໃດໜຶ່ງອອກຫຼາຍທີ່ສຸດຈະເຮັດໃຫ້ປະຊາຊົນຕັດສິນໃຈຍາກໃນຄວາມເຊື່ອຖືລະຫວ່າງສົມມຸດຖານທີ່ຜູ້ສື່ຂ່າວຕັ້ງເປັນຂໍ້ສັງເກດແຕ່ເລີ່ມຕົ້ນ ແລະຂໍ້ມູນຂ່າວສານ, ເອກະສານ, ຫຼັກຖານທີ່ໄດ້ມາຢືນຢັນກັບຂໍ້ມູນຫຼັກຖານ. ຜູ້ທີ່ມີອຳນາດໜ້າທີ່ຮັບຜິດຊອບ, ຮັກສາກົດລະບຽບ, ກົດໝາຍໃນເລື່ອງນັ້ນຈະຕ້ອງດຳເນີນການແນວໃດກັບຂໍ້ມູນທັງສອງຝ່າຍ ແລະ ສັງຄົມຈະມີຄວາມຄິດເຫັນແນວໃດ.

- ການປັກໃຈເຊື່ອສົມມຸດຖານຂອງຕົນເອງຫຼາຍເກີນໄປອາດຈະເຮັດໃຫ້ການລາຍງານຂ່າວໃຫ້ນ້ຳໜັກດ້ານໜຶ່ງຫຼາຍກວ່າອີກດ້ານໜຶ່ງ. ອາດຈະເຮັດໃຫ້ເກີດຄວາມຮູ້ສຶກວ່າ ໜັງສືພິມສະບັບນັ້ນມີຄະຕິມັກສະເໜີຂ່າວໃນທາງລົບ (Nega.ive Approach) ຈຶ່ງເປັນຜົນເສຍຂອງ ການລາຍງານຂ່າວສືບສວນໄດ້. ເຊິ່ງຜູ້ສື່ຂ່າວ, ຜູ້ບໍລິຫານທີ່ຄວບຄຸມທິດທາງຂອງໜ້າທີ່ໜັງສືພິມ ຄວນລະມັດລະວັງຢ່າງຍິ່ງ ເພາະອາດຈະເກີດຜົນກະທົບຕໍ່ພາບຫຼັກຄວາມເຊື່ອຖືຂອງໜັງສືພິມ ຫຼື ທຸລະກິດໂດຍລວມຂອງບໍລິສັດໃນໄລຍະຍາວໄດ້; ຕ້ອງທຳໃຫ້ຜູ້ອ່ານມີຄວາມຮູ້ສຶກທີ່ຈິງຈັງ, ໜ້າເຊື່ອຖື. ບໍ່ແມ່ນຂຽນບັນຍາຍຂ່າວທີ່ເນັ້ນສີສັນ, ບັນຍາຍການຈົດກາຍເປັນບົດວັນນະຄະດີ ຫຼື ນະວະນິຍາຍ.

**10.2. ຢ່າຫຼົງແຫຼ່ງຂ່າວ.**

ບາງຄັ້ງການເຮັດວຽກໃກ້ຊິດກັບນັກວິຊາການ ຫຼື ຜູ້ຊ່ຽວຊານດ້ານຕ່າງໆ ຂອງຜູ້ສື່ຂ່າວສືບສວນເຮັດໃຫ້ເກີດຄວາມເຫັນແກ່ໂຕຂຶ້ນກັບໂຕຜູ້ສື່ຂ່າວເອງໃນລັກສະນະທີ່ຄິດວ່າຕົນເອງຈະກາຍເປັນນັກວິຊາການ, ຜູ້ຊ່ຽວຊານໃນເລື່ອງນັ້ນໆ. ຫາກບໍ່ສາມາດພິສູດເລື່ອງຈົນເຫັນຜົນອອກມາຊັດເຈນແລ້ວຈະບໍ່ຍອມໃຫ້ຫົວໜ້າຂ່າວນຳສະເໜີຂ່າວເລື່ອງນັ້ນອອກໄປກ່ອນຢ່າງເດັດຂາດ. ບໍ່ວ່າຈະຢູ່ສະຖານທີ່ໃດກໍຕາມ, ທັງໆທີ່ເລື່ອງນັ້ນໄດ້ເກີດປະເດັນຂ່າວຂຶ້ນມາ ແລະມີຄຸນສົມບັດຂອງຄວາມເປັນຂ່າວ, ສາມາດລາຍງານອອກໄປສູ່ການຮັບຮູ້ຂອງຜູ້ອ່ານໄດ້ແລ້ວກໍຕາມ.

- ຫາກຜູ້ສື່ຂ່າວຫຼົງແຫຼ່ງຂ່າວຈົນເກີນໄປເກີດຄວາມຄິດ ຫຼື ຄວາມຢ້ານວ່າເຂົາຈະເສຍຫາຍຢ່າງນັ້ນຢ່າງນີ້. ຄົນດີຄວນລາຍງານເປັນຂ່າວໄດ້, ຄົນບໍ່ດີບໍ່ຄວນລາຍງານເປັນຂ່າວ (ຄວາມຄິດ) ເປັນຕົ້ນ. ບາງເທື່ອເຮັດໃຫ້ຜູ້ສື່ຂ່າວລືມໜ້າທີ່ຫຼັກຂອງຕົນເອງທີ່ຕ້ອງລາຍງານເຫດການທີ່ເກີດຂຶ້ນໄປ ໃຫ້ຜູ້ອ່ານໄດ້ຮັບຮູ້ກ່ອນ, ບໍ່ແມ່ນມີໜ້າທີ່ຈະເຂົ້າໄປຈັດການແກ້ໄຂບັນຫາສັງການ ຫຼື ແກ້ຕາງໃນເລື່ອງນັ້ນເອງ. ແຕ່ມັນກໍຂຶ້ນຢູ່ກັບວິທີການໃນການລາຍງານ ແລະຕ້ອງແຈກແຍກເປັນກໍລະນີໄປ ທີ່ສຳຄັນຢູ່ກັບຄວາມເອົາຈິງເອົາຈັງຂອງເຈົ້າໜ້າທີ່ມີອຳນາດຈະດຳເນີນການໃນເລື່ອງນັ້ນ ຫຼື ບໍ່? ແລະດຳເນີນການແນວໃດ? ເຊັ່ນຕັ້ງກຳມະການສອບສວນພິຈາລະນາຕັດສິນລົງໂທດໜັກ, ເບົາແລ້ວແຕ່ກໍລະນີ.

- ຖ້າບໍ່ມີການດຳເນີນການໃດໆ ໃນເລື່ອງທີ່ເປັນຂ່າວໄປນັ້ນກໍບໍ່ໄດ້ໝາຍຄວາມວ່າ ການລາຍງານຂ່າວສືບສວນບໍ່ປະສົບຜົນສຳເລັດ. ເພາະດັ່ງທີ່ກ່າວມາແລ້ວໜ້າທີ່ໃນການຈັດການເປັນ

ຂອງເຈົ້າໜ້າທີ່ບ້ານເມືອງ. ສ່ວນໜ້າທີ່ໃນການລາຍງານຂ່າວເຫດການທີ່ເກີດຂຶ້ນເປັນຂອງຜູ້ສືບຂ່າວ. ການທີ່ຜູ້ສືບຂ່າວສາມາດຫາຄວາມຈິງ, ພະຍານຫຼັກຖານທີ່ແທ້ຈິງນຳມາສະເໜີເປັນຂ່າວທີ່ຖືກຕ້ອງໄດ້ສະແດງວ່າປະສົບຜົນສຳເລັດທີ່ແທ້ຈິງ.

**11. ການລາຍງານຂ່າວສືບສວນ.**

ຈຳເປັນຕ້ອງເຂົ້າໄປພິສູດຄວາມເປັນຈິງຂອງເຫດການດ້ວຍຕົວເອງ ເພື່ອໃຫ້ຮັບຮູຄວາມຈິງ, ອາດເຮັດໃຫ້ຜູ້ສື່ຂ່າວສືບສວນໃຊ້ວິທີການເຊື່ອງຊ້ອນຕົວເອງ, ປິດບັງເລ່ຫຼ່ຽມ ຫຼື ປົກປິດສະຖານະພາບຂອງການເປັນຜູ້ສື່ຂ່າວເຊັ່ນ: ທຳເປັນເຈົ້າໜ້າທີ່, ເປັນນັກສືບ, ເປັນສາຍລັບ, ປອມແປງໂຕເປັນຫຼາຍໆຄົນ ຫຼື ຈ່າຍເງິນໃຫ້ແຫຼ່ງຂ່າວເພື່ອໃຫ້ສຳພາດ.

ວິທີການເຊັ່ນນີ້ ເປັນປະເດັນທີ່ຖືກຖຽງກັນຫຼາຍກວ່າຜູ້ສື່ຂ່າວຄວນທຳຫຼືບໍ່? ຜູ້ສື່ຂ່າວຄວນຄົ້ນຫາວິທີການທີ່ດີກວ່າຫຼີກລ່ຽງວິທີໝິ່ນປະໝາດຕໍ່ຈັນຍາບັນໃຫ້ຫຼາຍທີ່ສຸດ. ເພາະໂດຍໜ້າທີ່ຜູ້ສື່ຂ່າວຕ້ອງເປີດເຜີຍສະແດງໂຕໃຫ້ແຫຼ່ງຂ່າວໄດ້ຮັບຮູ້ກົງກັນຂ້າມກັບນັກສືບ ຫຼື ສາຍສືບ.

- ວິເຄາະລະດັບຄວາມຮຸນແຮງຂອງເລື່ອງທີ່ມີຜົນກະທົບຕໍ່ສັງຄົມສ່ວນລວມແຕ່ລະເລື່ອງໃຫ້ຊັດເຈນເພື່ອປະກອບການຕັດສິນໃຈວ່າ ຈະໃຊ້ວິທີການແນວໃດຈະໄດ້ຂໍ້ມູນ ຫຼັກຖານມາໂດຍບໍ່ເສຍຈັນຍາບັນເລີຍ.

❀ ***ກໍລະນີສຶກສາ:*** ຕົວຢ່າງການລາຍງານຂ່າວແບບ Investigative Reporting.

● "ຫາກພົບສິ່ງທີ່ຜິດປົກກະຕິໃນສັງຄົມມະນຸດ ຫຼື ທຳມະຊາດ, ຂໍທ່ານຈົ່ງຢ່າເບິ່ງຂ້າມ. ໃຫ້ທ່ານຕັ້ງຂໍ້ສັງເກດ, ຕັ້ງຂໍ້ສົງໃສ, ຄຳຖາມ ແລະຫາຄຳຕອບເພື່ອຄົ້ນຫາຄວາມຈິງຕໍ່ໄປ..."

● <u>ໂຈດ:</u> ມື້ໜຶ່ງ ນັກສຶກສາ ເຊິ່ງເປັນຜູ້ສື່ຂ່າວເດີນທາງໂດຍລົດສ່ວນຕົວພ້ອມກັບນ້ອງຊາຍໄປທ່ຽວຈັງຫວັດ ອາຍຸດທະຍາ. ເມື່ອໄປເຖິງດອນເມືອງຈຶ່ງເກີດປວດຍ່ຽວສະວະຈຶ່ງຈອດລົດແວ່ຂ້າງທາງຈຶ່ງລົງໄປພົບຖົງສີດຳ 3 ຖົງວາງໄວ້ຢູ່ກໍ່ຫຍ້າ. ດ້ວຍຄວາມສົງໃສຈຶ່ງໃຫ້ນ້ອງຊາຍແກະຖົງນັ້ນເບິ່ງພົບໜັງຫົວເດັກອ່ອນ (ເດັກນ້ອຍ) ຢູ່ໃນຖົງເປັນຈຳນວນຫຼາຍສົ່ງກິ່ນເໝັນ. ນອກຈາກນັ້ນ ຍັງເຫັນຜ້າທີ່ເດັກນ້ອຍມີຂໍ້ຄວາມຂຽນວ່າ "ພັດທະນະເວດເຄນິກ" ຈຶ່ງຄິດວ່າຈະຕ້ອງສະເໜີຂ່າວນີ້. ເພາະວ່າໜ້າຈະເປັນຂ່າວສືບສວນສອບສວນໄດ້ ແຕ່ກໍຍັງຄິດບໍ່ຢ້ານສຳລັບຖົງໃສ່ສົບເດັກນ້ອຍຄວນຈະນຳໄປສົ່ງໃຫ້ຕຳຫລວດ.

❀ ***ຈຳເລີຍ:*** ປະເດັນຈາກໂຈດສະຫລຸບໄດ້ 3 ປະການດັ່ງນີ້:

● ພົບຖົງດຳ 3 ຖົງໃສ່ສົບເດັກນ້ອຍນຳມາຖິ້ມໄວ້ແຄມຖະໜົນດອນເມືອງ.

● ໃນຖົງມີຜ້າທີ່ເດັກມີຂໍ້ຄວາມວ່າ "ພັດທະນະເວດເຄນິກ".

● ຜູ້ສື່ຂ່າວຄິດວ່າຈະເອົາຖົງໄປໃຫ້ຕຳຫຼວດ ຫຼື ແຈ້ງໃຫ້ຕຳຫຼວດມາເອົາຖົງເອງ.

**❖ ການເຮັດຂ່າວສືບສວນສອບສວນມີຂໍ້ພິຈາລະນາຫລັກ 5 ປະການຄື:**

❶ ຜູ້ທີ່ເອົາຖົງດຳມາຖິ້ມໜ້າຈະກ່ຽວຂ້ອງກັບ ພັດທະນະເວດເຄນິກ.

❷ ພັດທະນະເວດເຄນິກ ໜ້າຈະເປັນແຫຼ່ງທຳແທ້ງເຖື່ອນ ແລະໜ້າຈະເຂົ້າຂ່າຍຜິດປະມວນກົດໝາຍອາຍາ.

❸ ພາວະການທຳແທ້ງເຖື່ອນໃນປັດຈຸບັນຄົງທຳໄດ້ງ່າຍດາຍ ແລະມີການທຳແທ້ງເຖື່ອນຫຼາຍ

❹ ນອກຈາກຈະຄົ້ນຫາຜູ້ກ່ຽວຂ້ອງກັບການທຳແທ້ງເຖື່ອນ. ໃນກໍລະນີນີ້ແລ້ວ ໜ້າຈະມີທີນທາງສະກັດກັ້ນໃນການເຮັດການທຳແທ້ງເຖື່ອນ.

❺ ເກີດຄວາມສົງໃສວ່າ ໜຸ່ມສາວໄວລຸ້ນໃນຍຸກປັດຈຸບັນມີເພດສຳພັນກັນກ່ອນແຕ່ງງານ ແລ້ວບໍ່ຮູ້ວິທີການປ້ອງກັນຄຸມກຳເນີດຢ່າງນັ້ນ ຫຼືບໍ່ ແລະແກ້ໄຂຢ່າງໃດ?

ຜູ້ສື່ຂ່າວຈະຕ້ອງສືບປະສານງານເຂົ້າມາຍັງຫົວໜ້າຂ່າວ ຫຼື ບັນນາທິການຂ່າວໃນສຳນັກງານພ້ອມກັບຄຳແນະນຳວ່າ ຕົ້ນເຫດກໍຄືຖົງດຳບັນຈຸນັ້ນຄວນຈະຈັດການແນວໃດ? ຕ້ອງລາຍງານສິ່ງທີ່ເຫັນລາຍລະອຽດ. ຜູ້ສື່ຂ່າວບໍ່ຄວນນຳຖົງນັ້ນໄປໃຫ້ຕຳຫຼວດ. ໂດຍຜູ້ສື່ຂ່າວສາມາດໃຫ້ນ້ອງຊາຍເຝົ້າຢູ່ບໍລິເວນທີ່ພົບຖົງດຳນັ້ນ ເພື່ອບໍ່ໃຫ້ໃຜມາແຕະຕ້ອງ. ນອກຈາກນັ້ນ ການທຳຂ່າວສືບສວນສອບສວນຕ້ອງເລີ່ມຕົ້ນດ້ວຍປະເດັນຂ່າວການຕັ້ງສົມມຸດຖານ, ການວາງແຜນ, ການວາງເປົ້າໝາຍ, ການສຳຫຼວດຂໍ້ມູນໃນເບື້ອງຕົ້ນ, ການເຂົ້າເຖິງແຫຼ່ງຂໍ້ມູນ, ການສຳພາດແບບເຈາະເລິກ. ທັງໝົດນີ້ ຈະຕ້ອງໄດ້ເອົາໃຈໃສ່ຢ່າງພິຖີພິຖັນ ແລະລະມັດລະວັງ. ການທຳຂ່າວສືບສວນປະກອບດ້ວຍຫຼາຍໆບັນຫາດັ່ງຕໍ່ໄປນີ້:

❶ ກົ່ນຂອງຂ່າວ.

❷ ການສຳຫຼວດຂໍ້ມູນເບື້ອງຕົ້ນ.

❸ ແຫຼ່ງຂໍ້ມູນ.

❹ ການສຳພາດ: - ສຳພາດຈາກພາຍນອກເຂົ້າໄປ.

- ສຳພາດແບບກົງປະເດັນ.

❺ ການກວດສອບຂໍ້ມູນ.

❻ ແຫຼ່ງຂ່າວປິດ (Anonymous Sources).

❼ ການທຳຂ່າວໂດຍການພາງຕົວ (Going Undercover).

❽ ການນຳສະເໜີຂໍ້ມູນ.

## 12. ສິ່ງທີ່ຈະຕ້ອງຕອບຕາມຫລັກການສະເໜີຂ່າວສືບສວນ

### 12.1. ການວາງແຜນເກັບກຳຂ່າວ

- ການສະເໜີຂ່າວ (ຄັ້ງທຳອິດຂອງເຫດການ) ຄວນເປັນຂ່າວໃຫຍ່ພໍສົມຄວນ, ສົມບົດ

ບາດ, ໃຫ້ຜູ້ອ່ານຮູ້ສຶກວ່າຜູ້ຂຽນຂ່າວຢູ່ໃນເຫດການຕອນນັ້ນແທ້ໆເຊັ່ນ: ຜູ້ສື່ຂ່າວເປັນຄົນພົບຖົງດຳບັນຈຸເດັກນ້ອຍດ້ວຍຕົນເອງ, ທັງເປັນຄົນແຈ້ງຕຳຫຼວດມາສືບສວນ. ທັງໝົດນີ້ສະແດງໃຫ້ເຫັນ ວ່າ: ຈຸດເລີ່ມຕົ້ນມາຈາກນັກຂ່າວ ຫຼື ໜັງສືພິມ.

- ເອີ້ນປະຊຸມໃນກອງບັນນາທິການ: ພະຍາຍາມເຂົ້າໃຈຂ່າວ, ປະເດັນ, ຄຸນຄ່າຂອງຂ່າວ. ເຊິ່ງຄຸນຄ່າຂອງຂ່າວນີ້ ແມ່ນການເອົາລູກອອກກ່ອນກຳນົດແມ່ນຜິດກົດໝາຍພ້ອມທັງສະທ້ອນບັນຫາຂອງສັງຄົມໃນຍຸກໂລກາພິວັດ.

- ຄັດເລືອກນັກຂ່າວໃນການຕິດຕາມ ແລະຕັ້ງທີມງານເຮັດວຽກສະເພາະດ້ານເຊັ່ນ: ຜູ້ສື່ຂ່າວສາທາລະນະສຸກ, ຕຳຫຼວດ, ອົງກອນສິດທິມະນຸດ, ການເມືອງ... ແຕ່ກໍຄວນຖາມຄວາມຄິດເຫັນຂອງປະຊາຊົນ, ນັກສຶກສາ, ນັກວິຊາການ ແລະອື່ນໆ.

- ຕັ້ງກະທູ້ໃນກອງປະຊຸມວ່າ: ຄວນຫາລື ແລະປະເມີນຜົນຄວາມຄືບໜ້າຂອງຂ່າວເປັນໄລຍະ ແລະຊ່ວຍກັນຕັດສິນໃຈຖ້າຕ້ອງເລືອກເອົາບັນຫາໃດໜຶ່ງຈົນກວ່າເລື່ອງດັ່ງກ່າວຈະກະຈ່າງແຈ້ງ ແລະສິ້ນສຸດລົງ.

### 12.2. ແນວທາງ ຫຼື ວິທີການເກັບກຳຂ່າວ

ເມື່ອວາງແຜນແລ້ວທຸກຄົນຕ່າງມີຄວາມເຂົ້າໃຈໃນຄຸນຄ່າຂອງຂ່າວ ແລະແນວທາງການເຮັດວຽກເຊິ່ງວິທີການເກັບກຳຂ່າວມີດັ່ງນີ້:

- ຜູ້ສື່ຂ່າວເລີ່ມຕິດຕາມຂ່າວໃນມື້ຕໍ່ມາວ່າ ຄລີນິກ (Clinic) ດັ່ງກ່າວເປັນສະຖານທີ່ເອົາລູກອອກຜິດກົດໝາຍຫຼືບໍ່, ຕັ້ງຢູ່ໃສ, ໃຜເປັນເຈົ້າຂອງ, ເປີດບໍລິການຈັກປີແລ້ວ, ຜູ້ຮັບຜິດຊອບແມ່ນໃຜ ແລະໄດ້ຮັບໃບອະນຸຍາດດຳເນີນທຸລະກິດແລ້ວຫຼືຍັງ? ວິທີຕິດຕາມຂ່າວຄວນໄປສັງເກດວ່າມີຜູ້ຍິງມາໃຊ້ບໍລິການແນວໃດເຊິ່ງຜູ້ສື່ຂ່າວຄວນເປັນຜູ້ຍິງຈຶ່ງຈະງ່າຍຕໍ່ການເກັບກຳລາຍລະອຽດມານຳສະເໜີເຊັ່ນ: ວາງຕົວເປັນຜູ້ຈະໃຊ້ບໍລິການໂດຍເຂົ້າໄປຂໍຄຳແນະນຳວ່າການຈະເອົາລູກອອກນັ້ນຄວນເຮັດແນວໃດ...

- ຜູ້ສື່ຂ່າວປະຈຳສາທາລະນະສຸກຕ້ອງຕິດຕາມການເຮັດວຽກຂອງເຈົ້າໜ້າທີ່ຜູ້ຮັບຜິດຊອບວ່າເຂົາເຈົ້າປະຕິບັດວຽກງານໄປຮອດໃສແລ້ວ.

- ຕິດຕາມຄວາມຄືບໜ້າຂອງເຈົ້າໜ້າທີ່ຕຳຫລວດວ່າມີການສືບສວນແນວໃດ.

- ລາຍງານຄວາມຄືບໜ້າ ແລ້ວຖາມຄວາມເຫັນຂອງຜູ້ກ່ຽວຂ້ອງທຸກຝ່າຍວ່າຄວນຈະດຳເນີນແນວໃດ. ບັນຫາຈະສິ້ນສຸດທີ່ບັນຫາໃດ, ລັດຖະມົນຕີ, ນັກການເມືອງ ແລະນັກກົດໝາຍເບິ່ງບັນຫານີ້ແນວໃດ. ຖ້າຜິດກົດໝາຍຈະມີໂທດແນວໃດ.

- ນອກຈາກໜັງສືພິມສະເໜີຂ່າວແລ້ວຕ້ອງມີບົດນຳ, ບົດວິຈານ, ບົດສຳພາດ ແລະລາຍງານກ່ຽວກັບເລື່ອງນີ້ຢ່າງມີນ້ຳໜັກເຊິ່ງຈະເຮັດໃຫ້ໜັງສືພິມໄດ້ຮັບການຍອມຮັບໃນການສະເໜີຂ່າວໃນຮູບພາບສືບສວນ.

### 12.3. ແຫຼ່ງຂ່າວ ຫຼື ແຫຼ່ງຂໍ້ມູນ

- ແຫຼ່ງຂ່າວທີ່ເປັນບຸກຄົນໄດ້ແກ່: ເຈົ້າໜ້າທີ່ຕຳຫຼວດ, ລັດຖະມົນຕີທີ່ກ່ຽວຂ້ອງ, ນັກການເມືອງ, ນັກສຶກສາ ແລະອື່ນໆ.

- ແຫຼ່ງຂ່າວທີ່ເປັນຂໍ້ມູນສະຖິຕິໄດ້ແກ່: ສະຖິຕິເອົາລູກອອກເຖື່ອນ, ສາເຫດການເອົາລູກອອກທີ່ ສະຫຼຸບເປັນລາຍງານຂອງລາດຊະການ, ສະຖານທີ່ເອົາລູກອອກມີຈັກແຫ່ງໃນທົ່ວປະເທດ. ສະຖິຕິແມ່ທີ່ໄດ້ຮັບຜົນກະທົບຈາກການເອົາລູກອອກມີຄືແນວໃດ?

### 12.4. ເປົ້າໝາຍ ຫຼື ວັດຖຸປະສົງ

ການເກັບກຳຂ່າວຕ້ອງວາງເປົ້າໝາຍ ຫຼື ວັດຖຸປະສົງຄື:

- ຈັບກຸມເຈົ້າຂອງຄລີນິກ (Clinic) ຖ້າພິສູດໄດ້ວ່າ ສະຖານທີ່ນີ້ຜິດກົດໝາຍແທ້.

- ທົບທວນກົດໝາຍອາຍາວ່າດ້ວຍການເອົາລູກອອກເຖື່ອນ ເພາະຜ່ານມາມີການເອົາລູກອອກແບບຜິດກົດໝາຍຫຼາຍ. ຂອບເຂດ-ເງື່ອນໄຂກົດໝາຍແຄບເກີນໄປເຊິ່ງຜູ້ຄົນກຳລັງວິພາກວິຈານຢູ່. ການຫ້າມເອົາລູກອອກຈະມີບັນຫາຕາມມາຫຼາຍກວ່າຜົນດີ.

-ອາດຈະມີ ຄລີນິກ (Clinic) ເຖື່ອນອື່ນໆທີ່ຍັງບໍ່ຖືກດຳເນີນຄະດີ, ການສະເໜີຂ່າວອາດຕັ້ງເປົ້າໝາຍວ່າກະຊວງສາທາລະນະສຸກຄວນປະສານງານກັບຕຳຫຼວດຈັບກຸມຄູ່ກໍລະນີດັ່ງກ່າວ.

### 12.5. ຂໍ້ຄວນລະມັດລະວັງ.

- ການລະບຸຊື່ ຄລີນິກ ຄວນລະວັງກ່ຽວກັບການກ່າວວ່າເປັນສະຖານທີ່ເອົາລູກອອກເຖື່ອນ ແລະບໍ່ຄວນລະບຸວ່າເຈົ້າຂອງຄລີນິກ ດັ່ງກ່າວເປັນຄົນສັ່ງໃຫ້ນຳສົບເດັກນ້ອຍໃສ່ຖົງໄປຖິ້ມ. ເພາະຜູ້ສື່ ຂ່າວອາດຈະຖືກຂໍ້ຫາໝິ່ນປະໝາດ.

- ການສະເໜີຊື່ ແລະຮູບພາບຂອງຜູ້ຍິງທີ່ມາໃຊ້ບໍລິການຄລີນິກດັ່ງກ່າວຕ້ອງລະວັງຢ່າລະບຸ ຊື່ແທ້ ຫຼື ຮູບທີ່ແໜັນໜາແລ້ວຈຶ່ໄດ້.

- ເຖິງວ່າການເອົາລູກອອກເຖື່ອນຈະຜິດກົດໝາຍອາຍາ ແຕ່ກໍເປັນປະເດັນທີ່ຜູ້ຄົນກຳລັງຖຽງກັນວ່າ ຫຼັກການດັ່ງກ່າວຄວນມີການປັບປຸງ. ດັ່ງນັ້ນ ເລື່ອງນີ້ອາດເປັນຄວາມຂັດແຍ່ງໃນ ແງ່ຂອງກົດໝາຍກຳນົດໂທດເອົາໄວ້, ແຕ່ໃນສະພາບຄວາມເປັນຈິງຂອງສັງຄົມອາດເຖິງເວລາແກ້ໄຂກົດໝາຍແລ້ວເພື່ອຄວາມເໝາະສົມ.ໜັງສືພິມຄວນວາງຕົວເປັນກາງ, ນັ້ນກໍຄືການລາຍງານຄວາມເປັນຈິງ ແລະສະກັດກັ້ນບໍ່ໃຫ້ບັນຫາເພດສຳພັນເສລີຈົນເກີນໄປ. ຮັບຟັງຄຳຄິດເຫັນຫຼາກຫຼາຍ ແລະຜັກດັນໃຫ້ບັນຫານີ້ເຂົ້າສູ່ຂະບວນການຂອງບ້ານເມືອງ.

❋ *ບັນຫາ:* ຫົວໜ້າກົມສາມັນສຶກສາ, ກະຊວງສຶກສາທິການໃຫ້ສຳພາດວ່າ: ຢາມ້າກຳລັງລະບາດໂຮງຮຽນມັດທະຍົມສຶກສາ. ມີໂຮງຮຽນທີ່ມີຊື່ສຽງແຫ່ງໜຶ່ງນັກຮຽນຕິດຢາມ້າເກືອບ

ເຄິ່ງໂຮງຮຽນ, ອາທິດແລ້ວນີ້ຕຳຫລວດໄດ້ຈັບກຸມນັກຮຽນຜູ້ໜຶ່ງໄປດຳເນີນຄະດີ, ຂໍ້ຫາຈຳໜ່າຍແລະເສບຢາ. ເຊິ່ງຂະນະນີ້ຍັງບໍ່ທັນມີການປະກັນຕົວ, ຢາກໃຫ້ສື່ມວນຊົນຊ່ວຍກັນ ປຸກລະດົມເພື່ອເຍົາວະຊົນຈະບໍ່ ໄດ້ຕົກເປັນທາດຂອງຢາເສບຕິດ.

**❀ ປະເດັນຂອງບັນຫາສະຫຼຸບໄດ້ດັ່ງນີ້:**

- ຢາມ້າກຳລັງເປັນບັນຫາໃຫຍ່ຂອງສັງຄົມ ເພາະໄດ້ລະບາດເຂົ້າໄປໃນໂຮງຮຽນສາມັນ.
- ໂຮງຮຽນສາມັນທີ່ມີຊື່ສຽງແຫ່ງໜຶ່ງນັກຮຽນຕິດຢາເກືອບເຄິ່ງໂຮງຮຽນ.